# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລາມລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

16-23 ພະຈິກ 2025
ປີທີ 14
ສະບັບທີ 1042
ລາຍສັປະດາ


## 3 ຄຳຖາມເຈາະຈີ້ມຕໍ່ການສະຫຼຸບຕີລາຄາການປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ




(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 12 ພະຈິກນີ້, ພາຍຫຼັງທີ່ທ່ານ ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ ໄດ້ລາຍງານກ່ຽວກັບການສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ; ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ເນັ້ນໃຫ້ສະມາຊິກສະພາແຫ່ງຊາດ (ສສຊ) ປະກອບຄຳເຫັນຢ່າງມີຈຸດສຸມແລະສອດຄ່ອງກັບສະພາບຕົວຈິງຂອງປະເທດເຮົາໃນປັດຈຸບັນ ໂດຍສະເໜີໃຫ້ບັນດາທ່ານ ສສຊ ລົງເລິກມີຄຳເຫັນ ແລະ ເຈາະຈີ້ມເພີ່ມຕື່ມ ເພື່ອໃຫ້ລັດຖະບານນຳ

ອ່ານຕໍ່ໜ້າ 2



### ແນວຄິດປະທານ ໄກສອນ ພົມວິຫານ ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ສຳລັບກົງຈັກຂອງທ້ອງຖິ່ນ, ແຂວງ, ເມືອງ ແມ່ນໃຫ້ປະກອບສ້າງຂຶ້ນ ໂດຍອີງຕາມຂະໜາດຂອງພົນລະເມືອງ, ພູມປະເທດ ເປັນຕົ້ນແມ່ນຄວາມອາດສາມາດ ແລະ ໜ້າທີ່ທິດທາງຂະຫຍາຍເສດຖະກິດ-ສັງຄົມ ອັນລະອຽດຂອງແຕ່ລະທ້ອງຖິ່ນ. ບໍ່ຄວນຕາຍຕົວຕາມແບບກົງຈັກຢູ່ຂັ້ນສູນກາງ, ບໍ່ຈຳເປັນຕ້ອງໃຫ້ຄືກັນ ລະຫວ່າງແຂວງຕ່າງໆນຳກັນ ຫຼື ລະຫວ່າງແຕ່ລະເມືອງນຳກັນໃນແຂວງດຽວ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 156, 157)

ໃນພາລະກິດດັດແປງໃໝ່ທັງໝົດຂອງພັກເຮົານັ້ນການດັດແປງພະນັກງານເປັນຂອດທີ່ມີບົດບາດສຳຄັນທີ່ສຸດ, ມັນເປັນປັດໄຈໜຶ່ງທີ່ຕັດສິນໄຊຊະນະ ຫຼື ການປະລາໄຊຂອງພາລະກິດດັດແປງໃໝ່ຂອງພັກເຮົາ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 160)

ອ່ານຕໍ່ສະບັບໜ້າ

## ຂະຫຍາຍຕາໜ່າງປົກປ້ອງທາງສັງຄົມໃຫ້ມີອັດຕາການປົກຄຸມຫຼາຍຂຶ້ນ

(ສພຊ) - ອີງຕາມການລາຍງານຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ກ່ຽວກັບທິດທາງແຜນວຽກຈຸດສຸມປີ 2026 ລັດຖະບານ ຈະສຸມໃສ່ປະຕິບັດດ້ານວັດທະນະທຳ-ສັງຄົມ:

1) ຄົ້ນຄວ້ານະໂຍບາຍໃນການສົ່ງເສີມການເຂົ້າຮຽນ, ບັນຫາການຂາດແຄນຄູ, ການປະລະການຮຽນ ແລະ ປັບປຸງຄຸນນະພາບການຮຽນ-ການສອນໃນທຸກຊັ້ນທຸກສາຍ ທັງກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການນຳໃຊ້ລະບົບຫຼັກສູດສາມັນສຶກສາ (6+3+3).

ອ່ານຕໍ່ໜ້າ 8



## ຜົນເສຍຫາຍມະຫາສານຈາກການສໍ້ລາດບັງຫຼວງ



(ສພຊ) - ວັນທີ 14 ພະຈິກຜ່ານມາ, ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX, ທ່ານ ປອ. ຄຳພັນ ພົມມະທັດ ປະທານອົງການກວດກາແຫ່ງລັດ ໄດ້ລາຍງານການຈັດຕັ້ງປະຕິບັດແຜນການ ເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ

ອ່ານຕໍ່ໜ້າ 9

## ທຳລາຍເນື້ອທີ່ລັກລອບປູກຝິ່ນ 2,029 ເຮັກຕາ



(ສພຊ) - ຕອນບ່າຍວັນທີ 12 ພະຈິກຜ່ານມາ, ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ; ທ່ານ ພົອ. ວິໄລ ຫຼ້າຄຳຟອງ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ

ອ່ານຕໍ່ໜ້າ 8

## ສ້າງນິຕິກຳປະຕິບັດໂທດປະຫານຊີວິດ ຄະດີຢາເສບຕິດ ໃຫ້ເປັນຮູບປະທຳ



(ສພຊ)-ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ເມື່ອວັນທີ 12 ພະຈິກຜ່ານມາ, ທ່ານ ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ມີຄຳເຫັນຕໍ່ບົດລາຍບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະ 5 ປີ (2021-2025) ເຊິ່ງສະເໜີລັດຖະບານຄົ້ນຄວ້າ ແລະ ເອົາໃຈໃສ່ຈັດຕັ້ງປະຕິບັດບາງບັນຫາດັ່ງນີ້:

1. ສືບຕໍ່ເຮັດວຽກງານໂຄສະນາສຶກສາອົບຮົມສ້າງຄວາມຮັບຮູ້ເຂົ້າໃຈຕໍ່ຜົນຮ້າຍຢາເສບ

ອ່ານຕໍ່ໜ້າ 9

## ຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ຜ່ອນຄາຍລົງ, ຄາດວ່າ GDP ຈະບັນລຸ 4.8%



(ສພຊ) - ຕອນເຊົ້າວັນທີ 12 ພະຈິກນີ້, ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ,

ອ່ານຕໍ່ໜ້າ 8


ຄຸນນະພາບ ລາວອັນມະນຸດ (ໜ້າ 8)

ຄວາມຮູ້ໜ້ອຍ ຢ່າຄິດເປັນຜູ້ນຳ (ໜ້າ 10)



ປະເທດຈະສີວິໄລ... (ໜ້າ 12)

# ສູນທອນພົດປະທານສະພາແຫ່ງຊາດ ກ່າວເປີດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX

(ສພຊ) - ໃນພິທີເປີດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ກ່າວສູນທອນພົດເປີດກອງປະຊຸມວ່າ: ປະຕິບັດຕາມ ມາດຕາ 58 ຂອງລັດຖະທຳມະນູນ ແລະ ມາດຕາ 57 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ, ມື້ນີ້, ກອງປະຊຸມສະໄໝສາມັນເທື່ອທີ10ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ ໃນທ່າມກາງບັນຍາກາດທີ່ທົ່ວພັກ-ລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດ ພວມສຸມໃສ່ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ໄລຍະທ້າຍສະໄໝເຂົ້າສູ່ວຽກງານຕົວຈິງຂອງແຕ່ລະຂົງເຂດຢ່າງຕັ້ງໜ້າ,ບັນດາອົງຄະນະພັກກະຊວງ, ອົງການ ແລະ ທ້ອງຖິ່ນ ໄດ້ດຳເນີນກອງປະຊຸມໃຫຍ່ຜູ້ແທນຂອງຕົນ ດ້ວຍຜົນສຳເລັດອັນຈົບງາມ ແລະ ປັດຈຸບັນ ທົ່ວປະເທດພວມມີຂະບວນການກະກຽມສະເຫຼີມສະຫຼອງວັນສະຖາປະນາ ສປປລາວ ຄົບຮອບ 50 ປີ ແລະ ວັນເກີດຂອງປະທານໄກສອນ ພົມວິຫານ ຄົບຮອບ 105 ປີ ດ້ວຍກິດຈະກຳຕ່າງໆຢ່າງຟົດຟື້ນ ແລະ ທົ່ວພັກພວມສຸມໃສ່ກະກຽມຮອບດ້ານໃຫ້ແກ່ການດຳເນີນກອງປະຊຸມໃຫຍ່ຜູ້ແທນທົ່ວປະ ເທດ ຄັ້ງທີ XII ຂອງຕົນ ແລະ ກະກຽມໃສ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ທີ່ຈະມີຂຶ້ນໃນຕົ້ນປີ 2026 ນີ້.

ກອງປະຊຸມສະໄໝສາມັນເທື່ອທີ10ເປັນກອງປະຊຸມຄັ້ງສຸດທ້າຍຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງຕະຫຼອດໄລຍະ 5 ປີທີ່ຜ່ານມາ ເຖິງວ່າສະພາບແວດລ້ອມຂອງພາກພື້ນ ແລະ ສາກົນ ໄດ້ຜັນແປໄປຢ່າງສັບສົນ, ວ່ອງໄວ, ສະຫຼັບ ຊັບຊ້ອນ, ຄາດຄະເນໄດ້ຍາກ ເຊິ່ງສົ່ງຜົນກະທົບໂດຍກົງຕໍ່ບັນດາປະເທດໃນໂລກ ລວມທັງປະເທດພວກເຮົາ, ບວກກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຢູ່ພາຍໃນປະເທດທີ່ແກ່ຍາວມາຫຼາຍປີ ທີ່ສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ, ການດຳລົງຊີວິດຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ. ແຕ່ດ້ວຍຄວາມເອົາໃຈໃສ່ປະສານສົມທົບວຽກງານຮ່ວມກັນຢ່າງໃກ້ຊິດ ແລະ ມີຄວາມເປັນເອກະພາບສູງ ລະຫວ່າງ ສະພາແຫ່ງຊາດ, ພັກ, ລັດຖະບານ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດແລະພາກສ່ວນທີ່ກ່ຽວຂ້ອງ ເຮັດໃຫ້ການຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ເປັນອັນລະອຽດເຂົ້າໃນການສ້າງ ແລະ ປັບປຸງກົດໝາຍ ມີຄວາມເລິກເຊິ່ງ, ສອດຄ່ອງກັບສະພາບຕົວຈິງຫຼາຍຂຶ້ນ, ການພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ມີຄວາມສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ບັນດາມະຕິກອງປະຊຸມສະພາແຫ່ງຊາດ ໄດ້ເປັນນິຕິກຳສຳຄັນ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຕ່າງໆນັບມື້ມີຄວາມສັກສິດນຳຜົນປະໂຫຍດມາສູ່ປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ; ການຕິດຕາມກວດກາຂອງສະພາແຫ່ງຊາດ ໄດ້ສ້າງສະຕິເຄົາລົບກົດໝາຍໃຫ້ແກ່ອົງການລັດຂັ້ນຕ່າງໆໃຫ້ມີຄວາມເຂັ້ມງວດ, ການຄຸ້ມຄອງບໍ ລິຫານລັດມີຄວາມໂປ່ງໃສ, ໜັກແໜ້ນແລະມີປະສິດທິຜົນ.

ໂດຍປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ ຈະໄດ້ພິຈາລະນາຮັບຮອງບັນຫາສຳຄັນພື້ນຖານຂອງປະເທດຊາດ ດັ່ງນີ້:

1)ບົດລາຍງານໂດຍສັງເຂບຂອງທ່ານນາຍົກລັດຖະມົນຕີກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025),ປະຈຳປີ2025, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 5 ປີ (2021-2025), ປະຈຳປີ 2025 ແລະ ແຜນເງິນຕາ ປະຈຳປີ 2025; ຮ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030),ປະຈຳປີ2026, ຮ່າງແຜນງົບປະມານແຫ່ງລັດ 5 ປີ (2026-2030), ປະຈຳປີ 2026 ແລະ ຮ່າງແຜນເງິນຕາ ປະຈຳປີ 2026; ການດັດແກ້ງົບປະມານແຫ່ງລັດ ລາຍຮັບ-ລາຍຈ່າຍວິຊາການຂອງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ປີ 2025 ແລະ ເງິນເກີນແຜນ ປີ 2024.




2)ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ- ການເງິນ ໃນໄລຍະ 5 ປີ (2021-2025) ແລະ ທິດທາງຕໍ່ໜ້າ.

3)ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດໃນໄລຍະ 5 ປີ (2021-2025) ແລະ ທິດທາງຕໍ່ໜ້າ.

4)ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ5ປີ(2021-2025), ປະຈຳປີ 2025 ແລະ ຮ່າງແຜນການເຄື່ອນໄຫວວຽກງານ 5 ປີ (2026-2030),ປະຈຳປີ2026 ຂອງອົງການກວດສອບແຫ່ງລັດ; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2024 ຂອງອົງການກວດສອບແຫ່ງລັດ.

5)ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ5ປີ(2021-2025), ປະຈຳປີ 2025 ແລະ ຮ່າງແຜນການເຄື່ອນໄຫວວຽກງານ 5 ປີ (2026-2030),ປະຈຳປີ2026 ຂອງອົງການກວດກາແຫ່ງລັດ; ບົດລາຍງານຜົນການກວດກາຕາມຜົນການກວດສອບ ປີ 2023 ຂອງອົງການກວດກາແຫ່ງລັດ.

6)ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ5ປີ(2021-2025), ປະຈຳປີ 2025 ແລະ ຮ່າງແຜນການເຄື່ອນໄຫວວຽກງານ 5 ປີ (2026-2030),ປະຈຳປີ2026 ຂອງສານປະຊາຊົນສູງສຸດ.

7)ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ5ປີ(2021-2025), ປະຈຳປີ 2025 ແລະ ຮ່າງແຜນການເຄື່ອນໄຫວວຽກງານ 5 ປີ (2026-2030),ປະຈຳປີ2026 ຂອງອົງການໄອຍະການປະຊາຊົນສູງສຸດ.

8.) ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ວຽກງານຈຸດສຸມຮອດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X, ຮ່າງແຜນການເຄື່ອນໄຫວວຽກງານ 5 ປີ (2026-2030),ປະຈຳປີ2026 ຂອງສະພາແຫ່ງຊາດ ຊຸດທີ X.

9) ບົດລາຍງານການກະກຽມວຽກງານເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V.

10) ມອບໃບຍ້ອງຍໍການສຳເລັດໜ້າທີ່ ແລະ ຍ້ອງຍໍໃຫ້ແກ່ສະມາຊິກສະພາແຫ່ງຊາດ ຊຸດທີ IX.

ນອກນັ້ນ, ກອງປະຊຸມຄັ້ງນີ້ຍັງຈະໄດ້ຮັບຟັງການຊີ້ແຈງຂອງສະມາຊິກລັດຖະບານແລະພາກສ່ວນກ່ຽວຂ້ອງຈຳນວນໜຶ່ງຕໍ່ຄຳຊັກຖາມຂອງບັນດາທ່ານສະມາຊິກສະພາແຫ່ງຊາດ.

ກອງປະຊຸມສະໄໝສາມັນເທື່ອທີ 10 ຄັ້ງນີ້ ຈະໄດ້ຄົ້ນຄວ້າພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ. ສະນັ້ນ, ເພື່ອຮັບປະກັນເຮັດໃຫ້ການຕົກລົງຂອງກອງປະຊຸມມີຄຸນນະພາບ, ມີປະສິດທິຜົນ ແລະ ບັນລຸຜົນຕາມແຜນການທີ່ວາງໄວ້, ໃນນາມປະທານກອງປະຊຸມ ຂ້າພະເຈົ້າຂໍຮຽກຮ້ອງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງພ້ອມພຽງເປັນຈິດໜຶ່ງໃຈດຽວ, ທຸ່ມເທເຫື່ອແຮງສະຕິປັນຍາ ເຂົ້າໃນການດຳເນີນກອງປະຊຸມສະພາແຫ່ງຊາດໃຫ້ມີຜົນສຳເລັດ ເປັນຕົ້ນ ການສະໜອງຂໍ້ມູນ, ການຄົ້ນຄວ້າ, ວິເຄາະວິໄຈບັນຫາຕ່າງໆໃຫ້ລະອຽດຈະແຈ້ງ ເພື່ອເຮັດໃຫ້ການພິຈາລະນາຮັບຮອງບັນຫາສຳຄັນຂອງຊາດ ມີຄວາມສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ນຳຜົນປະໂຫຍດຕົວຈິງມາສູ່ປະເທດຊາດ ກໍຄືປະຊາຊົນບັນດາເຜົ່າ. ຂ້າພະເຈົ້າຂໍຮຽກຮ້ອງມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ຈົ່ງໄດ້ນຳໃຊ້ສິດປະຊາທິປະໄຕໃນຂອບລັດຖະທຳມະນູນ ແລະ ກົດໝາຍ, ເສີມຂະຫຍາຍຫົວຄິດປະດິດສ້າງ ແລະ ເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນໃນການສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າເນື້ອໃນຢ່າງເລິກເຊິ່ງ, ປະກອບຄຳເຫັນຕໍ່ບັນຫາຕ່າງໆຢ່າງຖີ່ຖ້ວນ, ສ້າງສັນ, ຮັດກຸມ, ພາວະວິໄສ, ມີເຫດມີຜົນ ສອດຄ່ອງກັບແນວທາງປ່ຽນແປງໃໝ່ຂອງພັກ, ສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມຂອງປະເທດເຮົາໃນປັດຈຸບັນ ພ້ອມກັນຊອກຫາວິທີການ, ມາດຕະການ, ວິທີການແກ້ໄຂທີ່ແທດເໝາະກັບສະພາບຕົວຈິງ ແລະ ມີຂໍ້ສະເໜີຕໍ່ລັດຖະບານ ເພື່ອຊອກວິທີແກ້ໄຂບັນຫາຮີບດ່ວນ ແລະ ເຄັ່ງຮ້ອນຂອງສັງຄົມ ເຊິ່ງປະຊາຊົນຍັງມີຄວາມເປັນຫ່ວງເປັນໄຍ ແລະ ຄອງຄອຍການແກ້ໄຂບັນຫາຕ່າງໆໃຫ້ເປັນຮູບປະທຳດີຂຶ້ນກວ່າເກົ່າ; ພ້ອມກັນນັ້ນ, ກໍເພື່ອສ້າງຄວາມເປັນເອກະພາບສູງຕໍ່ບັນ ດາເນື້ອໃນທີ່ນຳມາຄົ້ນຄວ້າ, ພິຈາລະນາໃນກອງປະຊຸມຄັ້ງນີ້ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ສາມາດຮັບຮອງອອກເປັນມະຕິ ແລະ ນຳໄປຈັດຕັ້ງປະຕິບັດຢ່າງເປັນຮູບປະທຳຢ່າງແທ້ຈິງ.



## 3 ຄຳຖາມ...

(ຕໍ່ຈາກໜ້າ 1)

ໄປປັບປຸງແກ້ໄຂ ແລະ ຈັດຕັ້ງຜັນຂະຫຍາຍໃຫ້ມີຜົນສຳເລັດ ເຊິ່ງທ່ານມີບາງຄຳເຫັນເຈາະຈີ້ມ ດັ່ງນີ້:

1. ຜ່ານການຮັບຟັງການລາຍງານຂອງລັດຖະບານບັນດາທ່ານຜູ້ແທນເຫັນວ່າການສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄລຍະ 5 ປີ (2021-2025) ຖືກຕ້ອງ, ຄົບຖ້ວນ ແລະ ສອດຄ່ອງກັບສະພາບຕົວຈິງແລ້ວ ຫຼື ບໍ່? ໂດຍອີງໃສ່ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 03/ສພຊ, ລົງວັນທີ 10/8/2021, ສະບັບເລກທີ 111/ສພຊ, ລົງວັນທີ 21/11/2023, ຖ້າເຫັນວ່າຍັງມີບັນຫາໃດທີ່ຍັງບໍ່ທັນຈະແຈ້ງ ກໍສະເໜີໃຫ້ຜູ້ແທນມີຄຳເຫັນເພີ່ມຕື່ມ ໂດຍສະເພາະຜ່ານການຕິດຕາມກວດກາຂອງຜູ້ແທນຢູ່ເຂດເລືອກຕັ້ງຕ່າງໆໃນຂອບເຂດທົ່ວປະເທດ.

2. ຕໍ່ກັບຄາດໝາຍ, 5 ວຽກງານຈຸດສຸມ ແລະ ມາດຕະການຂອງວາລະແຫ່ງຊາດ, ບັນດາທ່ານເຫັນວ່າສາມາດປະຕິບັດຕາມມະຕິສະພາແຫ່ງຊາດແລ້ວ ຫຼື ບໍ່? ຜ່ານການຕິດຕາມກວດກາຂອງບັນດາທ່ານຜູ້ແທນ ເຫັນວ່າມີຂໍ້ຫຍຸ້ງຍາກ, ຂໍ້ສະດວກແນວໃດ? ສາມາດຖອດຖອນບົດຮຽນໄດ້ຄືແນວໃດ? ສະເໜີບັນດາທ່ານສະມາຊິກສະພາແຫ່ງຊາດປະກອບຄຳເຫັນເພີ່ມຕື່ມ.

3. ຕໍ່ກັບການກຳນົດທິດທາງແຜນການໃນຕໍ່ໜ້າຕາມການສະເໜີຂອງລັດຖະບານ ທີ່ໃຫ້ເຊື່ອມສານເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ X (2026-2030), ສະເໜີບັນດາທ່ານຜູ້ແທນມີຄຳເຫັນເພີ່ມຕື່ມ ໂດຍສະເພາະການປະຕິບັດບັນດາຄາດໝາຍ ແລະ ວຽກງຈຸດສຸມທີ່ຍັງຄົງຄ້າງໃນໄລຍະຜ່ານມາ.

# ສັງລວມຄຳເຫັນ ສສຊ ຕໍ່ແຜນງົບປະມານແຫ່ງລັດ




(ສພຊ) - ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ສັງລວມການປະກອບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ(ສສຊ) ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ:

1. ເກັບລາຍຮັບເຂົ້າງົບປະມານ ໃຫ້ສົມຄູ່ກັບການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນ (GDP) ໃຫ້ໄດ້ 20% ຂອງ GDP ຂຶ້ນໄປ;

2. ໃຊ້ເຄື່ອງມື ແລະ ລະບົບທັນສະໄໝ ໃນການເກັບລາຍຮັບຢູ່ທຸກຂະແໜງການ ແລະ ຄຸ້ມຄອງລາຍຈ່າຍໃຫ້ເປັນລະບົບຄົບຊຸດ, ລວມສູນ ແລະ ສາມາດເຊື່ອມຕໍ່ກັບທຸກຂະແໜງການ;

3. ພິຈາລະນາລະອຽດ ແລະ ຊັ່ງຊາຢ່າງທີ່ຖ້ວນຕື່ມ ຕໍ່ຜົນໄດ້, ຜົນເສຍ ຂອງການສະເໜີຂໍຍົກເວັ້ນພາສີ-ອາກອນ ແລະ ນະໂຍບາຍຕ່າງໆ ໃນການເກັບລາຍຮັບຈາກຊັບພະຍາກອນທຳມະຊາດ;

4. ຈັດສັນເງິນເກີນແຜນຂອງທ້ອງຖິ່ນໃຫ້ເໝາະສົມ, ອາດ 30 (ສູນກາງ)/70 (ທ້ອງຖິ່ນ) ຫຼື 20/80 ເພື່ອນຳໃຊ້ເຂົ້າໃນການບູລະນະ ແລະ ສ້ອມແປງເສັ້ນທາງທີ່ຊຸດໂຊມເປ່ເພ;

5. ກວດຄືນການປະຕິຮູບລັດວິສາຫະກິດ ໃຫ້ມີຄວາມຄືບໜ້າ ແລະ ສາມາດເປັນເຈົ້າພາທາງແທ້ໆ;

6. ສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍຕໍ່ຜູ້ມີຄຸນງາມຄວາມດີຂອງປະເທດຊາດ ໃຫ້ສຳເລັດໃນໄລຍະໄວໆນີ້;

7. ຄຸ້ມຄອງດ່ານສາກົນໃຫ້ເປັນລະບົບ, ປັບປຸງພື້ນຖານໂຄງລ່າງຂອງດ່ານ, ມີລະບົບທັນສະໄໝຄົບຊຸດ;

8. ສືບຕໍ່ປະຕິບັດນະໂຍບາຍການປະຢັດແລະຕ້ານການຟຸມເຟືອຍ ໂດຍສະເພາະການນຳໃຊ້ລົດລັດຕາມນິຕິກຳຢ່າງເຂັ້ມງວດ ແລະ ຊຳລະສະສາງພາຫະນະທີ່ຍັງຄ້າງຄາ ໃຫ້ສຳເລັດຕາມລະບຽບການແລະ ມີຄວາມເປັນເອກະພາບທົ່ວປະເທດ.

# ສະເໜີດັດແກ້ແຜນງົບປະມານແຫ່ງລັດປີ 2025



(ສພຊ) - ຕາມບົດລາຍງານສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປີ 2024 ແລະ ການສະເໜີດັດແກ້ແຜນງົບປະມານແຫ່ງລັດປີ 2025 ໂດຍທ່ານ ສັນຕິພາບ ພົມວິຫານ ລັດຖະມົນຕີກະຊວງການເງິນ ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ເມື່ອວັນທີ 13 ພະຈິກຜ່ານມາ ໃຫ້ຮູ້ວ່າ: ຜົນການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປີ 2024 ແລະ ການສະເໜີເພີ່ມລາຍຮັບ-ລາຍຈ່າຍຂອງບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ປີ 2025 ເນື່ອງຈາກສາມາດປະຕິບັດໄດ້ລື່ນແຜນເບື້ອງຕົ້ນເປັນຈຳນວນຫຼາຍສົມຄວນ ຈຶ່ງສະເໜີດັດແກ້ນຳໃຊ້ເຂົ້າໃນແຜນງົບປະມານແຫ່ງລັດປີ 2025 ຄື: 1) ເງິນເກີນແຜນຕາມຜົນຂອງການໄລ່ລຽງຂາດຕົວ ປີ 2024 ໄດ້ 8,510.09 ຕື້ກີບ; 2) ການສະເໜີເພີ່ມລາຍຮັບ-ລາຍຈ່າຍວິຊາການ ແລະ ກອງທຶນປີ 2025 ທີ່ບັນດາຫົວໜ່ວຍວິຊາການ ແລະ ກອງທຶນສາມາດປະຕິບັດໄດ້ລື່ນແຜນເບື້ອງຕົ້ນ 1,700 ຕື້ກີບ ໃນນີ້, ສູນກາງ 724 ຕື້ກີບ ແລະ ທ້ອງຖິ່ນ 976 ຕື້ກີບ.

ກະຊວງການເງິນ ຈຶ່ງສະເໜີດັດແກ້ແຜນງົບປະມານແຫ່ງລັດປີ 2025 ດັ່ງນີ້:

-ດ້ານລາຍຮັບເພີ່ມຂຶ້ນ ຈາກ 68,100 ຕື້ກີບ ມາເປັນ 69,800 ຕື້ກີບ ເພີ່ມ 1,700 ຕື້ກີບ;

- ລາຍຈ່າຍ ເພີ່ມຂຶ້ນ ຈາກ 71,850 ຕື້ກີບ ມາເປັນ 82,060 ຕື້ກີບ ເພີ່ມ 10,210 ຕື້ກີບ;

-ການຂາດດຸນເພີ່ມຂຶ້ນ ຈາກ 3,750 ຕື້ກີບ ມາເປັນ 12,260.09 ຕື້ກີບ (ເພີ່ມຈາກ -1% ມາເປັນ -3.27% ຂອງ GDP ການຂາດດຸນເພີ່ມດັ່ງກ່າວ ມີແຫຼ່ງທຶນຮອງຮັບແລ້ວ).

ສຳລັບຮ່າງແຜນງົບປະມານແຫ່ງລັດປີ 2026, ການຈັດສັນງົບປະມານໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ ໂດຍສັງເຂບດັ່ງນີ້:

1. ດ້ານລາຍຮັບ: ຄາດໝາຍລາຍຮັບ 83,600 ຕື້ກີບ ຫຼື ເທົ່າກັບ 20.02% ຂອງ GDP (ມູນຄ່າ GDP 417,523 ຕື້ກີບ) ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 22.76% ຫຼື ເປັນເງິນ 15,500 ຕື້ກີບ.

2. ດ້ານລາຍຈ່າຍ: ຄາດໝາຍລາຍຈ່າຍ 81,400 ຕື້ກີບ ຫຼື ເທົ່າກັບ 19.50% ຂອງ GDP ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 13.29% ເປັນເງິນ 9,550 ຕື້ກີບ.

ອີງໃສ່ຄາດໝາຍແຜນລາຍຮັບ-ລາຍຈ່າຍງົບປະມານທັງໝົດເກີນດຸນປະມານ 2,200 ຕື້ກີບ ເທົ່າກັບ 0.53% ຂອງ GDP.

ນອກຈາກແຜນລາຍຮັບ-ລາຍຈ່າຍທີ່ສະເໜີຂ້າງເທິງນັ້ນ, ຍັງມີແຜນຊຳລະຄືນຕົ້ນທຶນເງິນກູ້ຢືມພາຍໃນແລະຕ່າງປະເທດ ເຊິ່ງເປັນການບໍລິຫານໜີ້ສິນຕາມມາດຕາ 46 ຂອງກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ 62,923.36 ຕື້ກີບ ເທົ່າກັບ 15.07% ຂອງ GDP.

# ເກັບ 1.5 ໂດລາ/ໂຕນແຮ່ທາດ/ຖ້ຽວ ໄລຍະທາງ 10 ກມ ຂຶ້ນໄປ



(ສພຊ)-ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ເມື່ອວັນທີ 13 ພະຈິກຜ່ານມາ, ທ່ານ ເຫຼັກໄຫຼ ສີວິໄລ ລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ (ຍທຂ) ຊີ້ແຈງຕໍ່ບາງຄຳຊັກຖາມຂອງສະມາຊິກສະພາແຫ່ງຊາດ ກ່ຽວກັບບັນຫາທີ່ພົ້ນເດັ່ນທີ່ຕິດພັນກັບການຈັດຕັ້ງປະຕິບັດວຽກງານຂອງຂະແໜງ ຍທຂ ທ່າມກາງສະພາບເສັ້ນທາງຫຼວງແຫ່ງຊາດ, ທາງຫຼວງທ້ອງຖິ່ນ ມີການເປ່ເພໜັກໜ່ວງ ລັດຖະບານກໍໄດ້ຄົ້ນຄວ້າ ແລະ ຊີ້ນຳໃຫ້ກະຊວງ ຍທຂ ຈັດຕັ້ງປະຕິບັດມີຄວາມຄືບໜ້າຄືດັ່ງນີ້: ໄດ້ມອບໃຫ້ບັນດາແຂວງ, ນະຄອນຫຼວງ ເປັນເຈົ້າການຄັດຈ້ອນເສັ້ນທາງຫຼວງແຫ່ງຊາດສາຍຫຼັກຈຳນວນໜຶ່ງທີ່ມີການເປ່ເພໜັກ, ມີການຂົນສົ່ງສິນຄ້າ ແລະ ໂດຍສານຫຼາຍ ເພື່ອສ້ອມແປງ ແລະ ປັບປຸງຍົກລະດັບໃຫ້ສາມາດຮັບນ້ຳໜັກໄດ້ 11 ໂຕນຕໍ່ເພົາ ພ້ອມທັງຄົ້ນຄວ້າຄັດເລືອກບໍລິສັດທີ່ມີທ່າແຮງ, ມີມາດຕະຖານເງື່ອນໄຂຄົບຖ້ວນ ໃຫ້ສອດຄ່ອງຕາມລະບຽບການສາມາດປະຕິບັດໄດ້ຢ່າງວ່ອງໄວ ແລະ ເຊັນບົດບັນທຶກຄວາມເຂົ້າໃຈ (MoU) ເພື່ອດຳເນີນການສຳຫຼວດ, ສຶກສາຄວາມເປັນໄປໄດ້ ແລະ ອອກແບບຕາມຂໍ້ກຳນົດຂອບເຂດໜ້າວຽກ (ToR) ເພື່ອໃຫ້ທັນຈັດຕັ້ງປະຕິບັດໃນປີ 2026 ແລະ ຜ່ານມາກໍໄດ້ມີແຂວງຈຳນວນໜຶ່ງ ໄດ້ສຳເລັດການເຊັນ MoU ເປັນຕົ້ນ: ວຽງຈັນ, ຄຳມ່ວນ, ບໍລິຄຳໄຊ, ສະຫວັນນະເຂດ, ອຸດົມໄຊ, ຊຽງຂວາງ, ຫົວພັນ, ຫຼວງນ້ຳທາ ຢູ່ບາງຕອນທາງຂອງບັນດາເສັ້ນທາງ 13 ເໜືອ, 13 ໃຕ້, ທາງເລກ 22 ພູເກົ້າຫຼັກ ກາສີ-ເມືອງນານ, R3, 1D, 1C, 7, 6, 8, ທາງເລກ 21 ປາກຊັນ-ທ່າສີ-ທາງ 1D ຊາຍແດນແຂວງໄຊສົມບູນ.

ສະເພາະເສັ້ນທາງເລກ 9 ໄດ້ຕົກລົງສ້າງເປັນຕົວແບບນການປະຕິບັດໃນຮູບແບບ OPBRC ແລະ PRTC ສຳເລັດການເຊັນສັນຍາການກໍ່ສ້າງໃນວັນທີ 20 ຕຸລາ 2025 ແລະ ປັດຈຸບັນ ລັດວິສາຫະກິດກໍ່ສ້າງທາງເລກ 8 ໄດ້ໃຫ້ທີມງານວິຊາການລົງພາກສະໜາມ ແລະ ເລີ່ມຕົ້ນຈັດຕັ້ງປະຕິບັດຟື້ນຟູ ແລະ ສ້ອມແປງເສັ້ນທາງຕາມແຜນທີ່ກຳນົດໄວ້, ສ່ວນການເກັບເງິນ ຄາດວ່າຈະເລີ່ມຕົ້ນໃນວັນທີ 1 ມັງກອນ 2026; ປັດຈຸບັນ, ກະຊວງ ຍທຂ ໄດ້ເຫັນດີກຳນົດຈຸດເກັບເງິນ, ແບບແຕ້ມຈຸດເກັບເງິນ, ຄົ້ນຄວ້າອັດຕາການເກັບຄ່າຜ່ານທາງປະເພດລົດບັນທຸກສິນຄ້າ, ໂດຍສານທີ່ມີນ້ຳໜັກ 12 ໂຕນຂຶ້ນໄປ ໂດຍຈະນຳໃຊ້ລະບົບເກັບເງິນທີ່ທັນສະໄໝ, ຊິງຊັ່ງນ້ຳໜັກທັນສະໄໝ.

ຄົ້ນຄວ້າຟື້ນຟູກອງສ້ອມແປງທາງຄືນໃໝ່ໃນຂອບເຂດທົ່ວປະເທດ ເຊິ່ງສຳເລັດການອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງໜ່ວຍງານສ້ອມແປງເສັ້ນທາງຫຼວງ ເຊິ່ງຈະເປັນນິຕິກຳພື້ນຖານ ແລະ ເປັນບ່ອນອີງໃຫ້ແກ່ການສ້າງໜ່ວຍງານສ້ອມແປງຢູ່ນະຄອນຫຼວງ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ ເຊິ່ງງົບປະມານກອງທຶນທາງໃນປີ 2026 ແມ່ນໄດ້ແບ່ງໃຫ້ແຂວງລະ 1.5 ຕື້ກີບ.

ສຳລັບມາດຕະການໃນການຄວບຄຸມນ້ຳໜັກນັ້ນ, ໃຫ້ຈັດເກັບຄ່າຜ່ານທາງສຳລັບລົດບັນທຸກສິນຄ້າໂດຍສະເພາະລົດຂົນສົ່ງແຮ່ ເພື່ອມາສ້ອມແປງ, ຟື້ນຟູ ແລະ ບູລະນະຮັກສາທາງຫຼວງ ໂດຍມອບໃຫ້ທ້ອງຖິ່ນເປັນຜູ້ຈັດຕັ້ງປະຕິບັດ ແລະ ຈະໄດ້ຄົ້ນຄວ້າເກັບໃນລະຫວ່າງ 1.5 ໂດລາຕໍ່ໂຕນແຮ່ທາດຕໍ່ຖ້ຽວ ໄລຍະທາງ 10 ກມ ຂຶ້ນໄປ, ກໍລະນີໄລຍະການຂົນສົ່ງຜ່ານເສັ້ນທາງບໍ່ຮອດ 10 ກມ ແມ່ນໃຫ້ເກັບຫຼຸດອັດຕາທີ່ສອງຝ່າຍເອກະພາບກັນ, ສຳລັບງົບປະມານທີ່ເກັບໄດ້ ແມ່ນມອບເຂົ້າກອງທຶນທາງ ເພື່ອມາສ້ອມແປງ, ຟື້ນຟູທາງຫຼວງ; ນອກນັ້ນ, ຈະຕິດຕັ້ງຊິງຊັ່ງທັນສະໄໝຢູ່ຈຸດເກັບເງິນ.

ກະຊວງ ຍທຂ ໄດ້ສຳເລັດການແຈ້ງງົບປະມານກອງທຶນທາງປະຈຳປີ 2026 (ຄັ້ງທີ 1) ໃຫ້ນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ ຕາມເພດານງົບປະມານກອງທຶນທາງທີ່ໄດ້ຮັບການອະນຸມັດ 1 ພັນຕື້ກີບ.



# ກວດກາຄືນການເກັບຄ່າບໍລິການຮັກສາຄວາມປອດໄພໂທລະຄົມມະນາຄົມ 3,000 ກີບ, ໂຄງການ BRT ຄວນທາບທາມຄຳຄິດເຫັນປະຊາຊົນກ່ອນ, ຄົ້ນຄວ້າຄືນໂຄງສ້າງລາຄາໄຟຟ້າ ແຕ່ປີ 2025-2026



(ສພຊ) - ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ສັງລວມການປະກອບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍສະເພາະຕໍ່ຂະແໜງການເສດຖະກິດ:

**1. ຂົງເຂດອຸດສາຫະກຳ, ການຄ້າ ແລະ ພະລັງງານບໍ່ແຮ່**

1) ສຸມໃສ່ການປຸງແຕ່ງພາຍໃນໃຫ້ຫຼາຍຂຶ້ນ ເພື່ອນຳໃຊ້ຊັບພະຍາກອນທຳມະຊາດໃຫ້ເປັນປະໂຫຍດ ທັງເປັນການສ້າງມູນຄ່າໃຫ້ແກ່ຜະລິດຕະພັນນັບມື້ນັບສູງ;

2) ກວດກາ ແລະ ປະເມີນຄືນ ການອະນຸມັດໂຄງການຂຸດຄົ້ນແຮ່ທາດ, ຄວນຈະຢຸດເຊົາ ຫຼື ສືບຕໍ່ເພີ່ມຈັກໂຄງການ ແລະ ຄວນສະຫງວນໄວ້ໃຫ້ລູກຫຼານໃນຕໍ່ໜ້າ;

3) ຄົ້ນຄວ້າຄືນໂຄງສ້າງລາຄາໄຟຟ້າແຕ່ປີ2025-2029 ເຫັນວ່າມີການປັບລາຄາສູງຂຶ້ນເປັນຂັ້ນໆເຮັດໃຫ້ສົ່ງຜົນກະທົບຕໍ່ຜູ້ຊົມໃຊ້ແລະ ມີຫາງສຽງຈາກສັງຄົມຈຳນວນຫຼາຍ.

**2. ຂົງເຂດກະສິກຳແລະສິ່ງແວດລ້ອມ**

1) ຊຸກຍູ້, ສົ່ງເສີມການຜະລິດກະສິກຳໃຫ້ແຂງແຮງ ໂດຍຍົກສະມັດຖະພາບການຜະລິດ, ປັດໄຈການຜະລິດ, ເຕັກນິກວິຊາການ, ພື້ນຖານໂຄງລ່າງ, ການສ້າງກຸ່ມສະຫະກອນການຜະລິດ ແລະ ການສະໜອງສິນເຊື່ອ SME ທີ່ມີດອກເບ້ຍຜ່ອນຜັນໃຫ້ແກ່ຊາວກະສິກອນ ເຂົ້າໃນການຜະລິດໃຫ້ຫຼາຍຂຶ້ນ, ການຊອກຫາຕະຫຼາດໃຫ້ແກ່ຜະລິດຕະພັນ;

2) ມີນະໂຍບາຍ ແລະ ມາດຕະການ ໃນການຊ່ວຍເຫຼືອ ແລະ ຟື້ນຟູພື້ນທີ່ທຳການຜະລິດຂອງປະຊາຊົນ ທີ່ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດດ້ວຍຫຼາຍຮູບການ ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ສາມາດທຳການຜະລິດໄດ້ຕໍ່;

3) ໃຫ້ມີມາດຕະການຄຸ້ມຄອງຢ່າງເຂັ້ມງວດ, ກວດກາຄືນວຽກງານການຟື້ນຟູປ່າແລະປູກປ່າທົດແທນ ຂອງບັນດາໂຄງການລົງທຶນທີ່ໄດ້ມີການຫັນປ່ຽນທີ່ດິນປ່າໄມ້ ໄປເປັນທີ່ດິນປະເພດອື່ນ;

4) ຄົ້ນຄວ້າຄືນການກຳນົດຕົວເລກຄາດໝາຍການຂຶ້ນໃບທະບຽນອອກໃບຕາດິນ ໃຫ້ສອດຄ່ອງກັບຄວາມສາມາດໃນການຈັດຕັ້ງປະຕິບັດຕົວຈິງຂອງທ້ອງຖິ່ນ, ກວດກາຄືນອັດຕາຄ່າທຳນຽມ ແລະ ການບໍລິການ ຍັງມີລາຄາທີ່ສູງກວ່ານິຕິກຳກຳນົດ;

5) ການຄຸ້ມຄອງໂຄງການລົງທຶນ ຕິດພັນກັບວຽກງານເຊົ່າສຳປະທານທີ່ດິນລັດ ຍັງບໍ່ມີຄວາມເປັນເອກະພາບກັນ, ການແບ່ງຄວາມຮັບຜິດຊອບບໍ່ຈະແຈ້ງ, ເຮັດພໍໃຜພໍລາວ, ຫຼາຍໂຄງການຍັງບໍ່ທັນໄດ້ມີການຂຶ້ນທະບຽນນຳໃຊ້ທີ່ດິນ, ບາງໂຄງການມີຂໍ້ຂັດແຍ້ງທີ່ດິນ ແຕ່ຍັງບໍ່ມີການແກ້ໄຂແບບເດັດຂາດ, ບາງໂຄງການໄດ້ຮັບແຈ້ງຢຸດຕິກິດຈະການ ແຕ່ກໍຍັງດຳເນີນງານເປັນປົກກະຕິ, ໂຄງການໄດ້ຮັບອະນຸຍາດແຕ່ບໍ່ດຳເນີນງານເປັນການຈັບຈອງທີ່ດິນ ຫຼື ມີການຂາຍກິດຈະການໂຄງການລະຫວ່າງຜູ້ປະກອບການເອງ ໂດຍບໍ່ໄດ້ລາຍງານລັດຖະບານ.

**3. ຂົງເຂດໂຍທາທິການ ແລະ ຂົນສົ່ງ**

1) ຈັດສັນງົບປະມານສຸມໃສ່ການກໍ່ສ້າງແລະບູລະນະສ້ອມແປງພື້ນຖານໂຄງລ່າງ ໂດຍສະເພາະເສັ້ນທາງຫຼວງແຫ່ງຊາດພາຍໃນປະເທດ ແລະ ເສັ້ນທາງທ້ອງຖິ່ນ ທັງຄວບຄຸມນ້ຳໜັກຂອງລົດບັນທຸກຢ່າງເຂັ້ມງວດ;

2) ພິຈາລະນາຄືນ ແລະ ສຶກສາພື້ນຖານຄວາມຕ້ອງການຂອງປະເທດຊາດ ເພື່ອກໍ່ສ້າງໂຄງການລົດເມດ່ວນ (BRT) ເຊິ່ງກ່ອນການລົງມືຄວນຮັບຟັງຄຳຄິດເຫັນ ແລະ ທາບທາມຄຳຄິດຄຳເຫັນປະຊາຊົນກ່ອນເພາະໂຄງການດັ່ງກ່າວ ເຫັນວ່າບໍ່ທັນແທດເໝາະກັບສະພາບຄວາມເປັນຈິງດ້ານພື້ນຖານໂຄງລ່າງຂອງລາວໃນປັດຈຸບັນ;

3) ພິຈາລະນາກ່ຽວກັບການກຳນົດບາງດ່ານສາກົນພາຍໃນປະເທດ ເນື່ອງຈາກຍັງມີຫຼາຍດ່ານທີ່ ສປປລາວ ກຳນົດເປັນດ່ານສາກົນ ແຕ່ປະເທດໃກ້ຄຽງຍັງບໍ່ທັນກຳນົດເປັນດ່ານສາກົນ ເຊິ່ງເຮັດໃຫ້ການພົວພັນປະສານງານບໍ່ທັນໂລ່ງລ່ຽນແລະຍົກລະດັບການບໍລິການຂອງດ່ານສາກົນ, ປະເພນີ ແລະ ທ້ອງຖິ່ນ ເປັນຕົ້ນດ້ານພື້ນຖານໂຄງລ່າງຂອງດ່ານ, ສະໜອງງົບປະມານໃຫ້ແກ່ການບໍລິການ, ການສ້າງບຸກຄະລາກອນ ແລະ ອື່ນໆ.

**4. ຂົງເຂດເຕັກໂນໂລຊີ**

1) ກວດກາຄືນຕໍ່ກັບການເກັບຄ່າບໍລິການຮັກສາຄວາມປອດໄພໂທລະຄົມມະນາຄົມ ແລະ ອິນເຕີເນັດ ຈຳນວນ 3,000 ກີບ/ໝາຍເລກ/ເດືອນ ເຫັນວ່າຍັງມີຫາງສຽງຈົ່ມວ່າຈາກສັງຄົມ ແລະ ປະຊາຊົນ ຕໍ່ກັບການຕັດເງິນຈຳນວນດັ່ງກ່າວ,

ຄວນອະທິບາຍຊີ້ແຈງໃຫ້ສັງຄົມຮັບຮູ້ຢ່າງກວ້າງຂວາງຕື່ມ;

2) ຈັດສັນງົບປະມານໃນການຊຸກຍູ້ສົ່ງເສີມດ້ານການນຳໃຊ້ເຕັກໂນໂລຊີແລະນະວັດຕະກຳໃໝ່ໆ ເຂົ້າໃນທຸກຂົງເຂດວຽກງານເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດດິຈິຕອນ.



# ບໍ່ອະນຸຍາດ 20 ບໍລິສັດ ນຳໃຊ້ເງິນຕາ ຊຳລະ/ຮັບຊຳລະ ຢູ່ພາຍໃນປະເທດ



(ສພຊ) - ວັນທີ 13 ພະຈິກຜ່ານມາ, ທ່ານ ນາງ ບຸນຄຳ ວໍລະຈິດ ຜູ້ວ່າການທະນາຄານແຫ່ງ ສປປລາວ (ທຫລ) ໄດ້ຊີ້ແຈງຕໍ່ບາງຄຳຊັກຖາມຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ໃນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ ວ່າ: ຮອດວັນທີ 11 ພະຈິກ 2025 ທຫລ ໄດ້ຄົ້ນຄວ້າການສະເໜີຂໍອະນຸຍາດນຳໃຊ້ເງິນຕາຕ່າງປະເທດຢູ່ ສປປລາວ ຂອງບັນດາບໍລິສັດ ສຳເລັດ 53 ບໍລິສັດ ໃນນັ້ນ, ບໍ່ອະນຸຍາດ 20 ບໍລິສັດ ແລະ ອະນຸຍາດໃຫ້ຊຳລະ ແລະ ຮັບຊຳລະເງິນຕາຕ່າງປະເທດ 33 ບໍລິສັດ ເຊິ່ງບໍລິສັດທີ່ໄດ້ຮັບອະນຸຍາດ ໄດ້ຂາຍເງິນຕາຕ່າງປະເທດເຂົ້າລະບົບທະນາຄານຕາມລະບຽບການ 6.74 ລ້ານໂດລາຫຽບເທົ່າ; ຜ່ານການຈັດຕັ້ງປະຕິບັດ ເຫັນວ່າຍັງມີສິ່ງທ້າທາຍຄື: 1) ສັງຄົມຍັງມີຄວາມຊິນເຄີຍນຳໃຊ້ເງິນຕາຕ່າງປະເທດໃນການຮັບຊຳລະ/ຊຳລະ;ສະນັ້ນ, ບາງຫົວໜ່ວຍທຸລະກິດ ແມ່ນຖືເບົາຕໍ່ການຈັດຕັ້ງປະຕິບັດຕໍ່ລະບຽບການ. 2) ບາງຂະແໜງຂອງພາກລັດ ຍັງມີການຮຽກເກັບພັນທະຕໍ່ລັດເປັນເງິນຕາຕ່າງປະເທດ, ເຮັດໃຫ້ຄວາມຕ້ອງການເງິນຕາຕ່າງປະເທດເພື່ອຊຳລະແມ່ນຍັງສູງ; ສະນັ້ນ, ຕໍ່ກັບວຽກງານດັ່ງກ່າວ ຕ້ອງໄດ້ມີການເຜີຍແຜ່, ຊຸກຍູ້ໃຫ້ບັນດາຫົວໜ່ວຍທຸລະກິດຮັບຊຳລະເປັນສະກຸນເງິນກີບຫຼາຍຂຶ້ນ ແລະ ຫັນເຂົ້າສູ່ລະບຽບການເທື່ອລະກ້າວ.

ສຳລັບ 3 ຄາດໝາຍຕົ້ນຕໍໃນແຜນເງິນຕາ 5 ປີ (2026-2030) ຄື: 1) ລະດັບຄັງສຳຮອງກຸ້ມການນຳເຂົ້າໄດ້ 5 ເດືອນ; 2) ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPLs) ໃຫ້ຢູ່ໃນລະດັບບໍ່ເກີນ 3%; ແລະ ໂດຍສະເພາະ 3) ອັດຕາເງິນເຟີ້ໃຫ້ຢູ່ໃນລະດັບສະເລ່ຍ 5% (ເໜັງຕີງ ± 2%) ກໍເປັນຄາດໝາຍທີ່ທ້າທາຍຫຼາຍພໍສົມຄວນ ໃນສະພາບຄວາມບໍ່ແນ່ນອນຂອງການຈັດຕັ້ງປະຕິບັດນະໂຍບາຍຂອງບັນດາປະເທດເສດຖະກິດໃຫຍ່ແລະລັດຖະບານ ກໍມີແຜນການປັບເພີ່ມຂຶ້ນດັດຊະນີເງິນເດືອນໃຫ້ແກ່ພະນັກງານ ເຊິ່ງອາດຈະສົ່ງຜົນຕໍ່ການເໜັງຕີງຂອງອັດຕາເງິນເຟີ້ຢ່າງຫຼີກລ່ຽງບໍ່ໄດ້. ແຕ່ ທຫລ ຈະສູ້ຊົນ ແລະ ຄົ້ນຄວ້າບັນດານະໂຍບາຍ ແລະ ມາດຕະການ ໃຫ້ແທດເໝາະກັບສະພາບທີ່ເກີດຕົວຈິງ ໂດຍການສົມທົບກັບບັນດາຂະແໜງການກ່ຽວຂ້ອງ ຄົ້ນຄວ້າມາດຕະການຄຸ້ມຄອງລາຄາສິນຄ້າ ໄປຄຽງຄູ່ກັບມາດຕະການທາງດ້ານການເມືອງແນວຄິດ ໂດຍການສ້າງຄວາມເຂົ້າໃຈໃຫ້ສັງຄົມ ຕໍ່ການປັບເພີ່ມຂຶ້ນດັດຊະນີເງິນເດືອນ ເພື່ອບໍ່ໃຫ້ພໍ່ຄ້າຊາວຂາຍ ສວຍໂອກາດປັບຂຶ້ນລາຄາສິນຄ້າໃນທ້ອງຕະຫຼາດ.

# ມອບ-ຮັບນ້ຳດື່ມ ເພື່ອຊຸກຍູ້ກອງປະຊຸມສະໄໝສາມັນເທື່ອທີ 10



(ສພຊ) - ວັນທີ 11 ພະຈິກຜ່ານມາ, ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີພິທີມອບ-ຮັບນ້ຳດື່ມແຮ່ມິນີໂຣ ຈຳນວນ 526 ແພັກ ລວມມູນຄ່າ 100 ລ້ານກວ່າກີບ ຈາກໂຮງງານນ້ຳດື່ມແຮ່ທາດມິນີໂຣ ແລະ ນ້ຳໝາກໄມ້ ຈຳກັດ ເພື່ອປະກອບສ່ວນຊຸກຍູ້ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX ເຊິ່ງມອບໂດຍທ່ານ ນາງ ວັນຄຳ ຈັນທະປະດິດ ພະນັກງານບໍລິຫານຫ້ອງການ ຕາງໜ້າໂຮງງານດັ່ງກ່າວ ແລະ ຕາງໜ້າຮັບໂດຍທ່ານ ນາງ ດາວເພັດ ສີຫາວົງ ຫົວໜ້າກົມການເງິນ, ມີພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

ໂອກາດດັ່ງກ່າວ, ທ່ານ ນາງ ດາວເພັດ ສີຫາວົງ ໄດ້ມອບໃບຍ້ອງຍໍຂອງຄະນະເລຂາທິການສະພາແຫ່ງຊາດ ໃຫ້ໂຮງງານນ້ຳດື່ມແຮ່ທາດມິນີໂຣ ແລະ ນ້ຳໝາກໄມ້ ຈຳກັດ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນອຸປະຖຳໃນຄັ້ງນີ້.

# ລົງທຶນໃສ່ສຶກສາ ແລະ ສາທາ 18% ຂອງ GDP, ເກັບພາສີນຳເຂົ້າເຄື່ອງດື່ມທີ່ມີທາດເຫຼົ້າຍັງຕໍ່າຫຼາຍ



(ສພຊ) - ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ສັງລວມການປະກອບຄຳເຫັນຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍສະເພາະຕໍ່ຂະແໜງວັດທະນະທຳ-ສັງຄົມ:

1. ວຽກງານສຶກສາທິການ ແລະ ກິລາ

1) ການຈັດຕັ້ງປະຕິບັດບັນດາຄາດໝາຍຍັງບໍ່ບັນລຸຫຼາຍຄາດໝາຍທີ່ສຳຄັນ, ການແກ້ໄຂບັນຫາປະລະການຮຽນ, ຄຸນນະພາບການສຶກສາແລະບັນຫາການຂາດຄູເຮັດໃຫ້ມີການສອນຫ້ອງຄວບຫຼາຍໃນຊັ້ນປະຖົມ.

2) ແກ້ໄຂບັນຫາການລົງທຶນໃສ່ຂົງເຂດສຶກສາ ແລະ ສາທາ ທີ່ກຳນົດໄວ້ 18% ຂອງ GDP ຕາມກົດໝາຍລະບຸໄວ້; ພັດທະນາຫຼັກສູດການສຶກສາສຳລັບຄົນພິການ; ສະໜອງໂກຕາຄູໃຫ້ຂະແໜງສຶກສາ, ພິຈາລະນາໂກຕາຄູອະນຸບານຢູ່ໂຮງຮຽນທີ່ຍັງຂາດຫຼາຍ; ເພີ່ມເງິນເດືອນ ແລະ ສະຫວັດດີການໃຫ້ຄູໃຫ້ຫຼາຍຂຶ້ນ; ການຫັນປ່ຽນລະບົບການຮຽນ-ການສອນ ຈາກຮູບແບບ 5+4+3 ເປັນ 6+3+3 ເຫັນຄວນໃຫ້ເລີ່ມປະຕິບັດລະບົບໃໝ່ນີ້ຕັ້ງແຕ່ຫົວທີ ໂດຍສະເພາະແມ່ນເຂດທີ່ມີຄວາມພ້ອມ ແລະ ສົ່ງເສີມການຮຽນສາຍອາຊີວະສຶກສາ (ການສຶກສາວິຊາຊີບ) ໃຫ້ຫຼາຍຂຶ້ນ.

**2. ວຽກງານສາທາລະນະສຸກ**

ການບໍລິການປິ່ນປົວສຸຂະພາບຍັງບໍ່ເປັນທີ່ເພິ່ງພໍໃຈຂອງປະຊາຊົນ, ການສະໜອງຢາ ແລະ ອຸປະກອນການແພດ ຍັງມີບັນຫາ, ເຫັນຄວນສະໜອງງົບປະມານເຂົ້າໃນກອງທຶນປະກັນສຸຂະພາບທີ່ຍັງຕິດໜີ້ສູງ; ການແກ້ໄຂເອົາແພດອາສາສະໝັກເປັນພະນັກງານ; ຄົ້ນຄວ້າການເກັບພາສີນຳເຂົ້າປະເພດເຄື່ອງດື່ມທີ່ມີທາດເຫຼົ້າ ເຊິ່ງເຫັນວ່າຍັງເກັບໃນອັດຕາທີ່ຕໍ່າຫຼາຍ.

**3. ວຽກງານແຮງງານ ແລະ ສະຫວັດດີການສັງຄົມ**

1) ຈັດສັນງົບປະມານເຂົ້າໃນການຈັດຕັ້ງປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານຄຸນງາມຄວາມດີຕໍ່ການປະຕິວັດຊາດປະຊາທິປະໄຕ ໃຫ້ສຳເລັດ;

2) ຍົກລະດັບສີມືແຮງງານລາວ ແລະ ສ້າງຄວາມເຂົ້າໃຈກ່ຽວກັບຄ່ານິຍົມໃນການຫຼັ່ງໄຫຼ່ອອກໄປເຮັດວຽກຢູ່ຕ່າງປະເທດ, ສົ່ງເສີມວຽກເຮັດງານທຳຢູ່ພາຍໃນປະເທດ, ແກ້ໄຂບັນຫາການຂາດແຄນແຮງງານ;

3) ລົງທຶນເຂົ້າໃນການເຝິກອົບຮົມວິຊາຊີບ ແລະ ພັດທະນາສີມືແຮງງານໃນຂະແໜງຕ່າງໆທີ່ຈຳເປັນ;

4) ກຳນົດເອົາວຽກງານການປົກປ້ອງສັງຄົມ, ວຽກງານຄົນພິການ ເປັນຕົ້ນ: ຫຼັກສູດການຮຽນ-ການສອນຄົນພິການ, ການພັດທະນາສີມືແຮງງານ, ການຊອກຫາວຽກເຮັດງານທຳໃຫ້ຄົນພິການ, ການປັບປຸງພື້ນຖານໂຄງລ່າງທີ່ຕິດພັນກັບຄົນພິການ.

# ໂຄງການແຮ່ທາດແບບທົດລອງ 93 ບໍລິສັດ ຫັນເຂົ້າສູ່ລະບົບປົກກະຕິ




(ສພຊ)-ຕາມການລາຍງານຂອງທ່ານ ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ ໃນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ເມື່ອວັນທີ 12 ພະຈິກຜ່ານມາ ໃຫ້ຮູ້ວ່າ: ນັບແຕ່ປີ 2024 ເປັນຕົ້ນມາ ບັນດາໂຄງການແຮ່ທົດລອງໄດ້ຫັນເຂົ້າໄປສູ່ລະບົບປົກກະຕິ ແລະ ມີການປະເມີນດ້ານປະສິດທິພາບ ແລະ ປະສິດທິຜົນຂອງການຈັດຕັ້ງປະຕິບັດເຊິ່ງໂຄງການແຮ່ທາດແບບທົດລອງ ມີ 93 ບໍລິສັດ (ແຮ່ເຫຼັກ 37 ບໍລິສັດ, ຫີນມາໂບ້ 2 ບໍລິສັດ, ແຮ່ຄຳເຄົ້າ 10 ບໍລິສັດ, ແຮ່ຄຳຕົກຂ້ອນ 31 ບໍລິສັດ ແລະ ແຮ່ທາຍາກ 13 ບໍລິສັດ) ກວມເນື້ອທີ່ 39,866.11 ເຮັກຕາ; ປັດຈຸບັນ, ສາມາດຫັນປ່ຽນຈາກຮູບແບບທົດລອງ ມາເປັນຮູບແບບກົນໄກປົກກະຕິຕາມລະບຽບກົດໝາຍ ສຳເລັດ 35 ບໍລິສັດ ປະກອບມີ: ແຮ່ເຫຼັກ 24 ບໍລິສັດ, ແຮ່ຄຳ (ຄຳເຄົ້າ) 7 ບໍລິສັດ, ແຮ່ທາຍາກ 4 ບໍລິສັດ. ພ້ອມນັ້ນ, ມີ 18 ບໍລິສັດ ໄດ້ສະເໜີຫັນປ່ຽນ ແລະ ເຈລະຈາທາບທາມ (ໂຄງການແຮ່ເຫຼັກ 8 ບໍລິສັດ, ຄຳເຄົ້າ 2 ບໍລິສັດ, ຫີນມາໂບ້ 2 ບໍລິສັດ ແລະ ແຮ່ທາຍາກ 6 ບໍລິສັດ; ນອກນີ້, ມີ 7 ບໍລິສັດ ທີ່ບໍ່ສະເໜີ, 2 ບໍລິສັດ ສະເໜີສົ່ງຄືນໂຄງການແລະ 31 ບໍລິສັດ ທີ່ດຳເນີນກິດຈະການຂຸດຄົ້ນແຮ່ຄຳຕົກຂ້ອນ ຖືກແຈ້ງຍົກເລີກສັນຍາ. ສຳເລັດການຈັດປະເພດໂຄງການລົງທຶນດ້ານບໍ່ແຮ່ (ແບບທົດລອງ) ປະເພດ A+ (ດີທີ່ສຸດ) ມີ 0 ບໍລິສັດ, ປະເພດ A (ດີຫຼາຍ) ມີ 8 ບໍລິສັດ, ປະເພດ B+ (ດີ) ມີ 17 ບໍລິສັດ, ປະເພດ B (ດີປານກາງ) ມີ 43 ບໍລິສັດ, ປະເພດ C+ (ອ່ອນ) ມີ 25 ບໍລິສັດ, ປະເພດ C (ອ່ອນຫຼາຍ ຫຼື ບໍ່ເຄື່ອນໄຫວ) ມີ 0 ບໍລິສັດ.

ດ້ານໂຍທາທິການແລະຂົນສົ່ງ: ປັດຈຸບັນ ໄດ້ເປີດນຳໃຊ້ບໍລິການທ່າບົກ 3 ເຂດ (ທ່າບົກສະຫວັນນະເຂດ, ທ່າບົກຈຳປາສັກ ແລະ ທ່າບົກທ່ານາແລ້ງ ນະຄອນຫຼວງວຽງຈັນ), ໃນປີ 2025 ລັດຖະບານໄດ້ເປີດນຳໃຊ້ທ່າເຮືອຫວຸ້ງອາງ ຢ່າງເປັນທາງການ ເຊິ່ງຈະກາຍເປັນພື້ນຖານອັນສຳຄັນຕໍ່ການສົ່ງເສີມການຜະລິດ ແລະ ຂົນສົ່ງສິນຄ້າຂອງ ສປປລາວ ເຊື່ອມເຂົ້າກັບຕະຫຼາດຂອງພາກພື້ນ ແລະ ສາກົນໃຫ້ຫຼາຍຂຶ້ນ, ຂົນສົ່ງຜ່ານລົດໄຟລາວ-ຈີນ ມີຜູ້ໂດຍສານເພີ່ມຂຶ້ນ ຈາກ 1.4 ລ້ານເທື່ອຄົນ ໃນປີ 2022 ເປັນ 3.8 ລ້ານເທື່ອຄົນ ໃນປີ 2024 ແລະ ໃນໄລຍະ 9 ເດືອນຂອງປີ 2025 ມີຜູ້ໂດຍສານປະມານ 2.77 ລ້ານເທື່ອຄົນ ເພີ່ມຂຶ້ນ 5.7% ສົມທຽບກັບໄລຍະດຽວກັນຂອງປີຜ່ານມາ ແລະ ຄາດວ່າຈະສາມາດປະຕິບັດໄດ້ປະມານ 3.93 ລ້ານເທື່ອຄົນ ໝົດປີ 2025, ບໍລິມາດການຂົນສົ່ງສິນຄ້າຜ່ານລົດໄຟ ລາວ-ຈີນ ເພີ່ມຂຶ້ນ ຈາກ 2.23 ລ້ານໂຕນ ໃນປີ 2022 ເປັນ 4.78 ລ້ານໂຕນ ໃນປີ 2024 ແລະ ມາຮອດ 9 ເດືອນ ປີ 2025 ປະຕິບັດໄດ້ 4.22 ລ້ານໂຕນ ເພີ່ມຂຶ້ນ 6% ທຽບກັບໄລຍະດຽວກັນຂອງປີຜ່ານມາ ແລະ ຄາດຄະເນທ້າຍປີ 2025 ຈະບັນລຸໄດ້ 4.86 ລ້ານ ສ້າງລາຍຮັບເຂົ້າສູ່ງົບປະມານຈາກການມອບພັນທະຄ່າທຳນຽມ ໃນໄລຍະແຕ່ທ້າຍປີ 2021 - ມິຖຸນາ 2024 ໄດ້ 52 ຕື້ກີບ; ນອກນັ້ນ, ຍັງໄດ້ສຳເລັດການປັບປຸງສະໜາມບິນສາກົນ 2 ແຫ່ງຄື: ສະໜາມບິນສາກົນວັດໄຕແລະສະໜາມບິນສາກົນຫຼວງພະບາງ ເຊິ່ງມາຮອດເດືອນ 9 ປີ 2025 ຂົນສົ່ງຜູ້ໂດຍສານໄດ້ 1.743 ລ້ານເທື່ອຄົນ ເທົ່າກັບ 77.50% ຂອງແຜນການປີ ແລະ ຂົນສົ່ງສິນຄ້າໄດ້ 3.05 ພັນໂຕນ ເທົ່າກັບ 78.21% ຂອງແຜນການປີ; ເກັບລາຍຮັບຈາກຄ່າບິນຜ່ານນ່ານຟ້າ ເຂົ້າສູ່ງົບປະມານປີ 2022 ໄດ້ 26.8 ລ້ານໂດລາ, ປີ 2023 ບັນລຸ 52.9 ລ້ານໂດລາ, ປີ 2024 ໄດ້ 74.66 ລ້ານໂດລາ ແລະ ໄລຍະ 10 ເດືອນ ປີ 2025 ໄດ້ 75.23 ລ້ານໂດລາ.

# ເຍົາວະຊົນຈາກ 18 ແຂວງ ຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ ສພຊ



(ສພຊ) - ຕອນບ່າຍວັນທີ 12 ພະຈິກຜ່ານມາ, ກົມສື່ມວນຊົນຮ່ວມກັບຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ (ສພຊ) ໄດ້ຕ້ອນຮັບ ແລະ ນຳພາເຍົາວະຊົນຈາກ 18 ແຂວງທົ່ວປະເທດ ຈຳນວນ 311 ຄົນ ເຊິ່ງນຳໂດຍທ່ານ ສົມບູນ ຄູນນະວົງ ຮອງຫົວໜ້າກົມເຍົາວະຊົນ, ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ພ້ອມດ້ວຍບັນດາເລຂາ, ຮອງເລຂາຄະນະບໍລິຫານງານຊາວໜຸ່ມ 18 ແຂວງທົ່ວປະເທດ ທີ່ມາທັດສະນະສຶກສາຢ້ຽມຊົມຫໍມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ.

ການມາທັດສະນະສຶກສາຄັ້ງນີ້, ໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆໃນປະຫວັດສາດ, ຢ້ຽມຊົມການວາງສະແດງຮູບພາບ ແລະ ວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດ ຊຸດທີ I ເຖິງ ສະພາແຫ່ງຊາດຊຸດປັດຈຸບັນ (ຊຸດທີ IX) ແລະ ນ້ອງນັກຮຽນໄດ້ຕອບຄຳຖາມເພື່ອຮັບປຶ້ມທີ່ລະນຶກຈາກສພຊ; ຈາກນັ້ນ, ຍັງໄດ້ຢ້ຽມຊົມຫ້ອງປະຊຸມໃຫຍ່ ແລະ ຮ່ວມຖ່າຍພາບກັບຄະນະປະທານແລະສະມາຊິກສະພາແຫ່ງຊາດ ໃນໄລຍະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 10 ເຮັດໃຫ້ນ້ອງໆເຍົາວະຊົນ ມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການນິຕິບັນຍັດຫຼາຍຂຶ້ນ.

**(ນາງ ນິດຕາ ຄູນປາກດີ)**



# ຈັດສັນງົບປະມານເພີ່ມເຂົ້າໃສ່ພາກ ເງິນເດືອນ, ເງິນນະໂຍບາຍ 11 ພັນຕື້ກີບ



(ສພຊ) - ວັນທີ 13 ພະຈິກນີ້, ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX, ທ່ານ ສັນຕິພາບ ຜົມວິຫານ ລັດຖະມົນຕີກະຊວງການເງິນ ໄດ້ຊີ້ແຈງຕໍ່ຄຳຊັກຖາມຂອງສະມາຊິກສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດວຽກງານແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ.

ໄລຍະຜ່ານມາ, ກະຊວງການເງິນ ໄດ້ສັງລວມຂໍ້ມູນການສູນເສຍລາຍຮັບຈາກບັນດາໂຄງການລົງທຶນໃນຂອດນຳເຂົ້າ ໄລຍະ 5 ປີ ປະມານ 6 ພັນຕື້ກີບ ເຊິ່ງເປັນພຽງຕົວເລກເບື້ອງສົ້ນເຂົ້າຈາກການນຳເຂົ້າສິນຄ້າເທົ່ານັ້ນ ແຕ່ຍັງບໍ່ ລວມມູນຄ່າການຍົກເວັ້ນອາກອນພາຍໃນ ຄາດວ່າຍັງມີຈຳນວນຫຼາຍທີ່ບໍ່ສາມາດສັງລວມໄດ້; ປັດຈຸບັນ, ກະຊວງການເງິນກຳລັງຄົ້ນຄວ້າການນຳໃຊ້ລະບົບການວິເຄາະການສູນເສຍລາຍຮັບຈາກການຍົກເວັ້ນພາສີ-ອາກອນ ເຊິ່ງຈະເຮັດໃຫ້ການສັງລວມມີຄວາມຊັດເຈນຂຶ້ນໃນຕໍ່ໜ້າ.

ການຈັດສັນງົບປະມານເພີ່ມເຂົ້າໃສ່ພາກເງິນເດືອນ, ເງິນນະໂຍບາຍ 11 ພັນຕື້ກີບ ແມ່ນໄດ້ມາຈາກການເພີ່ມລາຍຮັບພາຍໃນ ໂດຍການຂະຫຍາຍຖານອາກອນມູນຄ່າເພີ່ມ, ການປັບອັດຕາອາກອນຊົມໃຊ້, ຂະຫຍາຍຖານອາກອນໃໝ່ ເປັນຕົ້ນ: ອາກອນສິ່ງແວດລ້ອມ, ອາກອນທີ່ດິນ ແລະ ອື່ນໆ ເຊິ່ງເປັນລາຍຮັບທີ່ໝັ້ນຄົງແລະມີຄວາມອາດສາມາດໃນການເກັບເພີ່ມຂຶ້ນໃນແຕ່ລະປີ ໄປຄຽງຄູ່ກັບການປະຕິບັດມາດຕະການປິດການຮົ່ວໄຫຼດ້ານລາຍຮັບ ຕິດພັນກັບການຫັນເປັນທັນສະໄໝ. ເພື່ອຮັບປະກັນໝາກຜົນຂອງການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ ຄວນເອົາໃຈໃສ່ບາງດ້ານຄື: ຂະແໜງການທີ່ກ່ຽວຂ້ອງ ໂດຍສະເພາະກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງເປັນເຈົ້າການກວດກາແລະຄຸ້ມຄອງລາຄາສິນຄ້າ, ສະບຽງອາຫານທີ່ຈຳເປັນ; ເຜີຍແຜ່ຂໍ້ມູນຂ່າວສານໃຫ້ສັງຄົມເຂົ້າໃຈຕໍ່ຄວາມຈຳເປັນ, ສາເຫດໃນການປັບຂຶ້ນເງິນເດືອນ, ເງິນນະໂຍບາຍເພື່ອບໍ່ໃຫ້ບັນດາຜູ້ປະກອບການ, ພໍ່ຄ້າແມ່ຄ້າ ສວຍໃຊ້ໂອກາດຂຶ້ນລາຄາສິນຄ້າ; ຊຸກຍູ້ສົ່ງເສີມການຜະລິດພາຍໃນໃຫ້ເຂັ້ມແຂງຂຶ້ນ ສາມາດຕອບສະໜອງຕະຫຼາດພາຍໃນໃຫ້ຫຼາຍຂຶ້ນ ພ້ອມທັງປັບປຸງຂໍ້ຫຍຸ້ງຍາກຕ່າງໆໃນການດຳເນີນທຸລະກິດ ໂດຍສະເພາະບັນຫາຕົ້ນທຶນ.

# ທັດສະນະຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ອົງການກວດກາ ແລະ ອົງການກວດສອບ




(ສພຊ) - ວັນທີ 14 ພະຈິກຜ່ານມາ, ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX, ຫຼັງຈາກທ່ານ ປອ. ຄຳພັນ ຜົມມະທັດ ປະທານອົງການກວດກາແຫ່ງລັດ ໄດ້ລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ແລະ ແຜນການເຄື່ອນໄຫວວຽກງານ 5 ປີ (2026-2030), ປະຈຳປີ 2026 ຂອງອົງການກວດກາແຫ່ງລັດ; ບົດລາຍງານຜົນການກວດກາຕາມຜົນການກວດສອບປີ 2023 ແລະ ທ່ານ ວຽງທະວິສອນ ເທບພະຈັນ ປະທານອົງການກວດສອບແຫ່ງລັດ ໄດ້ລາຍງານການຈັດຕັ້ງປະຕິບັດແຜນເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025, ຜົນການກວດສອບປະຈຳປີ 2024 ແລະ ແຜນການເຄື່ອນໄຫວ 5 ປີ (2026-2030), ປະຈຳປີ 2026 ຂອງອົງການກວດສອບແຫ່ງລັດ; ທ່ານ ປອ ລີເບີ ລີບົ່ວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ໄດ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ມີຄຳເຫັນຕໍ່ບົດລາຍງານຂອງ 2 ອົງການດັ່ງກ່າວເຊິ່ງສະເໜີບາງທັດສະນະຕໍ່ອົງການກວດກາແຫ່ງລັດ ດັ່ງນີ້:

1) ສືບຕໍ່ຜັນຂະຫຍາຍບາງມາດຕາຂອງກົດໝາຍເປັນນິຕິກຳໃຕ້ກົດໝາຍ ໃຫ້ສຳເລັດຕາມແຜນ; ເອົາໃຈໃສ່ເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ມະຕິກອງປະຊຸມສະພາແຫ່ງຊາດ ໃຫ້ແກ່ເປົ້າໝາຍທີ່ຖືກກວດກາ, ພາກສ່ວນທີ່ກ່ຽວຂ້ອງ ຮັບຮູ້ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກວດກາ ໃຫ້ມີປະສິດທິພາບແລະປະສິດທິຜົນ.

2) ສືບຕໍ່ປັບປຸງແກ້ໄຂວຽກງານກວດກາໃຫ້ດີຂຶ້ນ ດ້ວຍການຖອດຖອນບົດຮຽນ, ເສີມຂະຫຍາຍຈຸດດີ, ແກ້ໄຂຈຸດອ່ອນ ແລະ ຂໍ້ຄົງຄ້າງ.

3) ເອົາໃຈໃສ່ກໍ່ສ້າງພະນັກງານ-ນັກກວດກາ ໃຫ້ເປັນມືອາຊີບ, ຍົກສູງຄຸນທາດການເມືອງ, ຈັນຍາບັນ-ຈັນຍາທຳເພື່ອຮັບປະກັນຄຸນນະພາບແລະສ້າງຄວາມເຊື່ອໝັ້ນຕໍ່ວຽກກວດກາ.

4) ເອົາໃຈໃສ່ຫັນເປັນທັນສະໄໝວຽກງານກວດກາ ໂດຍນຳໃຊ້ເຕັກໂນໂລຊີ, ອຸປະກອນ, ເຄື່ອງມືເຂົ້າໃນວຽກງານກວດກາໃຫ້ຫຼາຍຂຶ້ນ ເພື່ອຮັບປະກັນປະສິດທິພາບ, ປະສິດທິຜົນສູງຂຶ້ນ.

5) ສະເໜີລັດຖະບານຄົ້ນຄວ້າງົບປະມານເພື່ອຕອບສະໜອງຄວາມຕ້ອງການທີ່ຈຳເປັນຮັບໃຊ້ການເຄື່ອນໄຫວວຽກງານຂອງອົງການກວດກາແຫ່ງລັດ ຕາມການສະເໜີ.

**ຕໍ່ອົງການກວດສອບແຫ່ງລັດ**

1) ເອົາໃຈໃສ່ຈັດຕັ້ງປະຕິບັດບາງມາດຕາຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ ໃຫ້ມີຜົນສັກສິດ, ຜັນຂະຫຍາຍບາງມາດຕາຂອງກົດໝາຍດັ່ງກ່າວ ເປັນນິຕິກຳໃຕ້ກົດໝາຍໃຫ້ຄົບຖ້ວນ ແລະ ມີເນື້ອໃນຮັດກຸມ, ສາມາດເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວວຽກງານຂອງຕົນ.

2) ເອົາໃຈໃສ່ຊຸກຍູ້ຕິດຕາມການແກ້ໄຂຜົນການກວດສອບທີ່ຍັງຄ້າງ ໃຫ້ບັນລຸຕາມແຜນການ.

3) ເອົາໃຈໃສ່ສ້າງນັກກວດສອບແຕ່ລະຂັ້ນ 1-4 ໃຫ້ໄດ້ຫຼາຍຂຶ້ນ.

4) ສືບຕໍ່ຍົກລະດັບສະຖາບັນເຝິກອົບຮົມ ເປັນສະຖາບັນການສຶກສາດ້ານການກວດສອບແຫ່ງລັດ ໃຫ້ບັນລຸຕາມແຜນ.

5) ເອົາໃຈໃສ່ຫັນເປັນທັນສະໄໝວຽກງານກວດສອບ ເພື່ອຮັບປະກັນປະສິດທິພາບ, ປະສິດທິຜົນ ໃນການເຄື່ອນໄຫວວຽກງານໃຫ້ດີຂຶ້ນກວ່າເກົ່າ.

6) ສະເໜີລັດຖະບານຄົ້ນຄວ້າງົບປະມານເພື່ອຕອບສະໜອງຄວາມຕ້ອງການທີ່ຈຳເປັນຮັບໃຊ້ການເຄື່ອນໄຫວວຽກງານຂອງອົງການກວດສອບແຫ່ງລັດ ຕາມການສະເໜີ.

# ມອບ-ຮັບເຄື່ອງໃຫ້ກອງພົນທະຫານຮາບທີ 3, ມອບ-ຮັບເງິນ ແລະ ນ້ຳດື່ມຮັບໃຊ້ກອງປະຊຸມສະໄໝສາມັນເທື່ອທີ 10




(ສພຊ) - ວັນທີ 10 ພະຈິກນີ້, ສະພາແຫ່ງຊາດ (ສພຊ) ພ້ອມດ້ວຍຄະນະກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ໄດ້ຈັດພິທີມອບ-ຮັບເຄື່ອງອຸປະໂພກ-ບໍລິໂພກ ໃຫ້ແກ່ກອງພົນທະຫານຮາບທີ 3 ເມືອງຮຸນ ແຂວງອຸດົມໄຊປະກອບມີ: ເຂົ້າສານ, ເຄື່ອງນຸ່ງຫົ່ມ ແລະ ອື່ນໆ ລວມມູນຄ່າທັງໝົດ 252,844,000 ລ້ານກີບ, ຕາງໜ້າມອບໂດຍທ່ານ ດຣ. ນາງ ວິພາວັນ ຜົມວິຫານ ປະທານກອງທຶນຊ່ວຍເຫຼືອສັງຄົມ ແລະ ຕາງໜ້າຮັບໂດຍທ່ານ ນາງ ມະໄລພອນ ດາລາສຸກ ຄອບຄົວທົວໜ້າການທະຫານກອງພົນທະຫານຮາບທີ 3 ເຊິ່ງມີທ່ານ ຄຳຈັນ ໂສຕາປຣະເສີດ ປະທານກຳມາທິການບັນດາເຜົ່າທັງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ແລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ການມອບເຄື່ອງອຸປະໂພກ-ບໍລິໂພກໃນຄັ້ງນີ້, ເພື່ອຊຸກຍູ້ປະກອບສ່ວນກຳລັງແຮງສັງລວມໃຫ້ແກ່ທະຫານກອງພົນທະຫານຮາບທີ 3 ທີ່ກຳລັງປະຕິບັດວຽກງານປ້ອງກັນຢູ່ເຂດທຸລະກັນດານຫ່າງໄກສອກຫຼີກດ້ວຍຄວາມຫ້າວຫັນ ເຊິ່ງບັນດາສະຫາຍໄດ້ສຸມເຫື່ອແຮງ, ສະຕິປັນຍາ, ກຳລັງແຮງກາຍໃຈ ເຮັດໜ້າທີ່ປົກປັກຮັກສາອະທິປະໄຕດ້ວຍຄວາມອົງອາດກ້າຫານ.

ວັນທີ 14 ພະຈິກ, ສະພາແຫ່ງຊາດ ພ້ອມດ້ວຍຄະນະກອງທຶນຊ່ວຍເຫຼືອສັງຄົມ ໄດ້ຈັດພິທີມອບ-ຮັບ ເງິນ ແລະ ນ້ຳດື່ມ ເພື່ອສະໜັບສະໜູນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX ຈາກບໍລິສັດ ສຳຫຼວດ-ຂຸດຄົ້ນແຮ່ທາດ ແລະ ບໍລິການຂາອອກ-ຂາເຂົ້າ ຈຳກັດ, ບໍລິສັດ ດຳລົງພັນ ຂາອອກ-ຂາເຂົ້າ ຈຳກັດ ແລະ ບໍລິສັດ ດຳລົງພັນ ຂາອອກ-ຂາເຂົ້າ ຂົນສົ່ງກະສິກຳຄົບວົງຈອນ ຈຳກັດຜູ້ດຽວ ລວມມູນຄ່າທັງໝົດ 112.5 ລ້ານກີບ, ຕາງໜ້າຮັບໂດຍທ່ານ ດຣ. ນາງ ວິພາວັນ ຜົມວິຫານ ແລະ ຕາງໜ້າມອບໂດຍທ່ານ ພູເງິນ ຫຼວງສີສົມບັດ ປະທານບໍລິສັດ ສຳຫຼວດ-ຂຸດຄົ້ນແຮ່ທາດ ແລະ ບໍລິການຂາອອກ-ຂາເຂົ້າ ຈຳກັດ, ເຊິ່ງມີທ່ານ ປອ. ບຸນທັນ ບູນວິໄລ ຮອງເລຂາທິການສະພາແຫ່ງຊາດ ແລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ໂອກາດນີ້, ທ່ານ ດຣ. ນາງ ວິພາວັນ ຜົມວິຫານ ໄດ້ມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ໃຫ້ 3 ບໍລິສັດດັ່ງກ່າວ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນອຸປະຖຳໃນຄັ້ງນີ້.

**(ນາງ ກຸກກິກ ບຸດດາໄຊ)**



# ສສຊ ປະກອບເຫັນຕໍ່ຫຼາຍບັນຫາສຳຄັນ

(ສພຊ)-ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ເມື່ອວັນທີ 10-12 ພະຈິກຜ່ານມາ, ບັນດາສະມາຊິກສະພາແຫ່ງຊາດ(ສສຊ) ໄດ້ສຸມໃສ່ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາໃສ່ບົດລາຍງານຂອງລັດຖະບານໃນຫຼາຍບັນຫາສຳຄັນກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ, ການສະຫຼຸບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນໃນໄລຍະ 5 ປີ (2021-2025) ແລະ ທິດທາງຕໍ່ໜ້າ ທີ່ສະເໜີໂດຍທ່ານນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານຈຳນວນໜຶ່ງ ເຊິ່ງການປະກອບຄຳເຫັນສ່ວນໃຫຍ່ ແມ່ນເປັນໄປຕາມຄຳເຫັນເຈາະຈີ້ມຂອງປະທານກອງປະຊຸມ ລວມເຖິງບັນດາຄຳສະເໜີຂອງປະຊາຊົນທີ່ສາມາດຮວບຮວມໄດ້; ໂດຍລວມແລ້ວໄດ້ເຫັນດີເປັນເອກະພາບຕໍ່ທິດທາງແຜນການ ແລະ ສະແດງຄວາມຊົມເຊີຍຕໍ່ຜົນງານທີ່ລັດຖະບານຍາດມາໄດ້ໃນໄລຍະຜ່ານມາ ພ້ອມທັງສະເໜີໃຫ້ສຸມໃສ່ແກ້ໄຂບາງບັນຫາສຳຄັນເປັນຕົ້ນ: ສະພາບຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ການຄຸ້ມຄອງການລົງທຶນ, ຂະຫຍາຍ



ຕົວຂອງລວມຍອດຜະລິດຕະພັນພາຍໃນ (GDP), ພື້ນຖານໂຄງລ່າງຄົມມະນາຄົມ, ປາກົດການຫຍໍ້ທໍ້ໃນສັງຄົມ, ຊີວິດການເປັນຢູ່ຂອງປະຊາຊົນ ແລະ ອື່ນໆ.

**ທ່ານ ປອ. ນາງ ວາລີ ເວດສະພົງ** ສສຊ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ໄດ້ສະເໜີໃຫ້ລັດຖະບານເອົາໃຈໃສ່ຄຸ້ມຄອງເງິນຕາຕ່າງປະເທດໃຫ້ມີສະຖຽນລະພາບ, ຖ້າບໍ່ມີສະຖຽນລະພາບ ຈະສົ່ງຜົນກະທົບຕໍ່ເສດຖະກິດຂອງປະເທດເຮົາ; ໃນຂະນະດຽວກັນ, ການຄຸ້ມຄອງບໍ່ແຮ່ຢູ່ໃນໂຄງການແຮ່ທາດແບບທົດລອງ 93 ບໍລິສັດ ມີບໍລິສັດຕ່າງປະເທດຫຼາຍປານໃດ ແລະ ໃນ 93 ບໍລິສັດນັ້ນ, ເຫັນວ່າລາຍຮັບຈາກການຂຸດຄົ້ນແຮ່ທາດດັ່ງກ່າວຍັງໜ້ອຍບໍ່ກຸ້ມຄ່າກັບຖະໜົນຫົນທາງ, ສາຍນ້ຳ, ສິ່ງແວດລ້ອມ ທີ່ເປ່ເພຊຸດໂຊມ, ເສຍຫາຍໄປ ແລະ ເອົາກັບຄືນບໍ່ໄດ້. ດັ່ງນັ້ນ, ພວກ



ເຮົາຕ້ອງມີມາດຕະການໃນການແກ້ໄຂ, ສຳລັບຜູ້ສຳຫຼວດ ແລະ ຜູ້ຂຸດຄົ້ນ ກໍຕ້ອງແຍກກັນ ເພາະວ່າຜົນປະໂຫຍດຈະຕ່າງກັນ, ສະເໜີໃຫ້ລັດຖະບານເປັນເຈົ້າການໃນການສຳຫຼວດທັງໝົດບໍ່ແຮ່ໃນປະເທດລາວ ແລະ ຖ້າບໍລິສັດໃດຢາກມາສຳປະທານ ກໍຂໍໃຫ້ປະມູນເອົາ.

**ທ່ານ ນິສິດ ແກ້ວປັນຍາ** ສສຊ ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ ສະເໜີໃຫ້ລັດຖະບານປັບປຸງບາງເນື້ອໃນຂອງບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍສະເພາະເນື້ອໃນທີ່ເວົ້າເຖິງການຍົກລະດັບພື້ນຖານໂຄງລ່າງຄົມມະນາຄົມຢູ່ລາວເຮົາ ເຫັນວ່າຍັງບໍ່ທັນສອດຄ່ອງກັບສະພາບເງື່ອນໄຂຕົວຈິງເທົ່າທີ່ຄວນ.

**ທ່ານ ນາງ ມະນີວັນ ເຢຍປາວເຮີ** ສສຊ ປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ ສະເໜີໃຫ້ລັດຖະບານກຳນົດແຜນພັດທະນາວຽກງານການສຶກສາ ຕິດພັນກັບແຜນພັດທະນາປົກປ້ອງສັງຄົມແຫ່ງຊາດໃຫ້ເປັນອັນລະ ອຽດຈະແຈ້ງໃນປີຕໍ່ໆໄປ ໂດຍສະເພາະການບັນຈຸຫຼັກສູດການຮຽນ-ການສອນໃຫ້ຄົນພິການ ພ້ອມທັງເອົາໃຈໃສ່ພັດ ທະນາສີມືແຮງງານໄປນຳ ເພື່ອເຮັດໃຫ້ເຂົາເຈົ້າສາມາດສ້າງອາຊີບ ມີລາຍຮັບລ້ຽງຕົນເອງໄດ້.

**ທ່ານ ບຸນລ້ອມ ຊົມສີຫາປັນຍາ** ສສຊ ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ໄດ້ສະເໜີໃຫ້ລັດຖະບານ ພັດທະນາຂະແໜງການກະສິກຳເປັນຂະແໜງການນຳໜ້າ ເພື່ອກ້າວໄປສູ່ການປຸງແຕ່ງທີ່ມີຄຸນນະພາບ ເນື່ອງຈາກວ່າອາຊີບສ່ວນໃຫຍ່ຂອງຄົນລາວຫຼາຍກວ່າ 90% ແມ່ນດຳລົງຊີວິດດ້ວຍອາຊີບກະສິກຳ ບວກກັບການປະກອບການຄ້າໃນຮູບແບບຈຸນລະວິສາຫະກິດແລະວິສາຫະກິດຂະໜາດນ້ອຍ; ສະນັ້ນ, ລັດຖະບານຕ້ອງມີນະໂຍບາຍສົ່ງເສີມຢ່າງຈະແຈ້ງດ້ວຍຫຼາຍຮູບແບບ ເປັນຕົ້ນ: ຮູບແບບສະຫະກອນ, ຮູບແບບເປັນກຸ່ມ, ມີກຸ່ມຈັດເກັບຊື້ ແລະ ກຸ່ມຈັດຂາຍ ເພື່ອສ້າງໃຫ້ການຜະລິດ ແລະ ການຄ້າຂາຍ ໄປພ້ອມໆກັນໄດ້. ຕິດພັນກັບການສົ່ງເສີມການຜະລິດ ແລະ ການສົ່ງສິນຄ້າອອກຈຳໜ່າຍນັ້ນ ກໍຍັງແມ່ນການຄົມມະນາຄົມ, ຢາກເຮັດໄດ້ແນວນັ້ນ ລັດຖະບານຕ້ອງປັບປຸງເສັ້ນທາງໃຫ້ສາມາດເຊື່ອມຈອດ, ເຊື່ອມໂຍງໄດ້ເປັນປົກກະຕິ; ລັດຖະບານຕ້ອງແກ້ໄຂບັນຫາເສັ້ນທາງ ໄປພ້ອມກັບການຟື້ນຟູເຂດທຳການຜະລິດທີ່ຖືກຜົນກະທົບຈາກໄພພິບັດທຳມະຊາດ, ເລັ່ງແກ້ໄຂບັນຫາການລົງທຶນທີ່ທຳລາຍທຳມະຊາດເຊັ່ນ: ປ່າໄມ້ແລະທີ່ດິນ ໂດຍການຫຼີກລ່ຽງການນຳໃຊ້ຊັບພະຍາກອນທຳມະຊາດແບບຟຸມເຟືອຍ, ຫຼີກລ່ຽງການສະໜັບສະໜູນກະສິກຳແບບທຳລາຍທຳມະຊາດ ເປັນຕົ້ນ: ການປູກສາລີ, ປູກມັນຕົ້ນ ເນື່ອງຈາກຈະເປັນການທຳລາຍດິນ. ທ່ານຍັງສະເໜີຕໍ່ລັດຖະບານສ້າງລະບົບການປົກຄອງລັດໃຫ້ເຂັ້ມແຂງທາງດ້ານກົດໝາຍ.





**ທ່ານ ນາງ ສວຍເພັດ ທອງສົມບັດ** ສສຊ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ໄດ້ມີຄຳເຫັນໃນການພັດທະນາພື້ນຖານໂຄງລ່າງ ໂດຍສະເພາະເສັ້ນທາງຄົມມະນາຄົມ ຍັງຊັກຊ້າ, ການຄຸ້ມຄອງລົດບັນທຸກໜັກ ຍັງບໍ່ທັນເຂັ້ມງວດ, ເສັ້ນທາງຫຼວງແຫ່ງຊາດລະຫວ່າງແຂວງຫາແຂວງແມ່ນເປ່ເພໜັກໜ່ວງ ສະເພາະເສັ້ນທາງເລກ 6 ແຕ່ເມືອງຄຳ ແຂວງຊຽງຂວາງຫາແຂວງຫົວພັນ ແມ່ນເປ່ເພຊຸດໂຊມຫຼາຍ ເຊິ່ງເຮັດໃຫ້ການເດີນທາງຂອງຜູ້ໂດຍສານ, ການຂົນສົ່ງສິນຄ້າ ພົບຄວາມຫຍຸ້ງຍາກ ເຖິງແມ່ນວ່າໄລຍະເສັ້ນທາງບໍ່ຍາວ ແຕ່ກໍໃຊ້ເວລາເດີນທາງຫຼາຍສິບຊົ່ວໂມງ, ຫຼາຍມື້ຈຶ່ງຮອດຈຸດໝາຍປາຍທາງ, ຫາກມື້ໃດເກີດຝົນຕົກ ເສັ້ນທາງແມ່ນໄປບໍ່ໄດ້; ສະນັ້ນ, ສະເໜີໃຫ້ລັດຖະບານຮີບຮ້ອນເລັ່ງແກ້ໄຂ ເພື່ອເຮັດແນວໃດໃຫ້ເສັ້ນທາງກັບຄືນມາເດີນແລ່ນສະດວກ. ພ້ອມນີ້, ຍັງສະເໜີໃຫ້ລັດຖະບານ ກໍ່ສ້າງ, ສ້ອມ ແປງເສັ້ນທາງເລກ 6 ແຕ່ເມືອງຄຳ ຫາ ເມືອງຊຳເໜືອ ເປັນໂຄງການບຸລິມະສິດ.



**ທ່ານ ຄຳແສນ ສີສະວົງ** ສສຊ ປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ ໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ໂດຍສະເພາະການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນ (GDP) ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຜົນງານຂອງລັດຖະບານ ທີ່ໄດ້ບຸກບືນຂັບເຄື່ອນການພັດທະນາແຕ່ລະດ້ານ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ມີການຂະຫຍາຍຕົວຢ່າງຕັ້ງໜ້າໃນຕະຫຼອດໄລຍະ 5 ປີຜ່ານມາ. ລັດຖະບານໄດ້ຕັ້ງເປົ້າໝາຍການຂະຫຍາຍຕົວຂອງ GDP, ແຕ່ພາຍຫຼັງການຈັດຕັ້ງປະຕິບັດ ຍັງບໍ່ສາມາດບັນບໍ່ບັນລຸ; ສະນັ້ນ, ຂໍສັງເກດຕີລາຄາຄືນຄືແນວນີ້: GDP ແມ່ນຜົນບວກຂອງຫຼາຍປັດໄຈ ເຊິ່ງການຄິດໄລ GDP= c + I + Gs + (export-import) ໝາຍຄວາມວ່າ: ມູນຄ່າການໃຊ້ຈ່າຍຄົວເຮືອນ + ການລົງທຶນຂອງລັດຖະບານ+ການລົງທຶນຂອງພາກເອກະຊົນ + (ການສົ່ງອອກ-ນຳເຂົ້າ) ໃນນັ້ນ, ຜົນບວກທີ່ສຳຄັນແມ່ນການສົ່ງອອກແລະນຳເຂົ້າ (ດຸນການຄ້າ), ຖ້າຫາກການນຳເຂົ້າຫຼາຍກວ່າສົ່ງອອກ ຈະເປັນຜົນກະທົບໂດຍກົງຕໍ່ GDP ບໍ່ບັນລຸຕາມແຜນການທີ່ຕັ້ງໄວ້, ເມື່ອເບິ່ງການນຳເຂົ້າທີ່ມີຕົວເລກສູງ ແມ່ນການນຳເຂົ້າພາຫະນະ. ຜ່ານມາລັດຖະບານໄດ້ເອົາໃຈໃສ່ສົ່ງເສີມການຜະລິດພາຍໃນ ໂດຍສະເພາະແມ່ນການຜະລິດກະສິກຳ, ສົ່ງເສີມການທ່ອງທ່ຽວ; ແຕ່ຂະນະດຽວກັນ ພວກເຮົາກໍອະນຸຍາດນຳເຂົ້າພາຫະນະຟຸມເຟືອຍ. ດັ່ງນັ້ນ, ສະເໜີໃຫ້ຈຳກັດໂກຕານຳເຂົ້າ ຫຼື ເພີ່ມພາສີນຳເຂົ້າໃຫ້ສູງຂຶ້ນ ຄືກັບບົດຮຽນຕ່າງປະເທດ. ຄຽງຄູ່ກັນນັ້ນ, ການຫັນໃຫ້ປະຊາຊົນມານຳໃຊ້ລົດໄຟຟ້າແລະລະບົບຂົນສົ່ງສາທາລະນະ ຈຳເປັນທີ່ສຸດສຳລັບຕົວເມືອງໃຫຍ່ໆ; ປະເທດທີ່ພັດທະນາແລ້ວ ແລະ ກຳລັງພັດທະນາ ເຂົາກໍໃຊ້ພາຫະນະສາທາລະນະເປັນປັດໄຈແກ້ໄຂ ແລະ ອຳນວຍຄວາມສະດວກ. ພ້ອມດຽວກັນນັ້ນ, ຕໍ່ກັບພາຫະນະ ຫຼື ອຸປະກອນການຜະລິດ ແລະ ສິນຄ້າອຸປະໂພກທີ່ຕະຫຼາດພາຍໃນນິຍົມຫຼາຍ ທີ່ພາຍໃນເຮົາຜະລິດບໍ່ໄດ້ແລະຕ້ອງໄດ້ນຳເຂົ້າຫຼາຍ. ຕໍ່ບັນຫາດັ່ງກ່າວ ຍັງມີບັນຫາຕໍ່ອັດຕາແລກ ປ່ຽນພາຍໃນປະເທດ; ສະນັ້ນ, ສະເໜີໃຫ້ພິຈາລະນາດຶງດູດເອົາການລົງທຶນໃນຂະແໜງການ ຫຼື ປະເພດສິນຄ້າທີ່ປະຊາຊົນນິຍົມຫຼາຍ ມາຜະລິດຢູ່ພາຍໃນຈະເປັນການດີ, ພາຫະນະທີ່ຈຳເປັນ ກໍດຶງດູດມາຜະລິດຢູ່ພາຍໃນ ເຊິ່ງຈະເປັນການຊຸກຍູ້ GDP ຂະຫຍາຍຕົວ ແລະ ສາມາດຄຸ້ມຄອງອັດຕາແລກປ່ຽນ ແລະ ຄຸ້ມຄອງລາຄາສິນຄ້າໄດ້.

ອ່ານຕໍ່ໜ້າ 11




# ຄຸນນະພາບລາງວັນມະນຸດ

**# ດົ້ນກົບເມກ**

ຜູ້ຂຽນຂໍຕອບກົງແຕ່ຫົວທີວ່າຄຸນນະພາບຂອງຄົນເຮົາກໍຂຶ້ນຢູ່ກັບຄົນນີ້ເອງ ເຊິ່ງມັນບໍ່ແມ່ນມະນຸດຕ່າງດ້າວຈະມາຮູ້ຈັກມະນຸດດີ ແລ້ວຕັດສິນໃຫ້ວ່າຜູ້ນັ້ນຜູ້ນີ້ເປັນຄົນມີຄຸນນະພາບ ນອກຈາກກະໂຕຄົນເຮົາເອງ; ດັ່ງນັ້ນ, ການສ້າງວັດຖຸ-ສ້າງຄົນ, ສ້າງຜົນງານໃຫ້ໄດ້ຄຸນນະພາບ ຈຶ່ງຂຶ້ນຢູ່ກັບຄົນຜູ້ສ້າງ-ຜູ້ຮັບຜິດຊອບ. ເມື່ອເປັນດັ່ງນັ້ນ, ຄົນເຮົາກໍຕ້ອງມາຄິດແຍກແຍະອອກລະຫວ່າງໜ້າວຽກ ຫຼື ວັດຖຸທີ່ຢາກໄດ້-ຢາກສ້າງ ຂຶ້ນກັບຄົນຜູ້ມີໜ້າທີ່ຮັບຜິດຊອບໂດຍກົງ, ຜູ້ຂຽນຄິດວ່າປັດໄຈສຳຄັນກ່ອນໝູ່ແມ່ນຄົນທີ່ມີຄວາມຮູ້ ເມື່ອເວົ້າ-ຄິດນຳໄປສູ່ຜົນການກະທຳທີ່ໄດ້ຄຸນນະພາບສູງ.

ເຮົາຈະຄາດຄະເນໄດ້ແນວໃດວ່າສິ່ງທີ່ຢາກໄດ້ຈະອອກມາໄດ້ຄຸນນະພາບ ນີ້ແມ່ນຂໍ້ທີ່ຕ້ອງຄິດ ຍົກຕົວຢ່າງ: ໃນສັງຄົມໜຶ່ງ ຖ້າວ່າຈະຕັດສິນລາງວັນໃດໜຶ່ງໃຫ້ໃຜຄົນໜຶ່ງໄດ້ຮັບລາງວັນ ຍ່ອມຂຶ້ນກັບການແຕ່ງຕັ້ງກຳມະການ ເຊິ່ງລະຫວ່າງກຳມະການ ແລະ ຜົນງານທີ່ຕັດສິນ ຈະຖືກຖືວ່າເປັນຜົນງານສັນສ້າງທີ່ດີໄດ້ສູງນັ້ນ ຍ່ອມຂຶ້ນກັບສະຕິປັນຍາຂອງກຳມະການ ເຊິ່ງມັນກໍຄືກຳມະການດັ່ງກ່າວ ມີຄຸນນະພາບສູງພຽງໃດ? ຖ້າວ່າຜູ້ແຂ່ງເອົາລາງວັນເປັນຄົນຢູ່ຂ້າງກຳມະການ, ໝາຍຄວາມວ່າເວົ້າຈາປາໄສຮ່ວມວຽກງານຖືກໃຈກຳມະການ ເຂົາກໍຕັດສິນເອົາຄົນນັ້ນ ເພາະກຳມະການພິຈາລະນາເອົາຄົນຖືກໃຈຫຼາຍກວ່າລາງວັນທີ່ມີຄຸນນະພາບ, ນີ້ແຫຼະຄືຈຸດຊີ້ບອກວ່າ: ຄຸນນະພາບທີ່ຢາກໄດ້ຈະຢູ່ຈຸດໃດ, ເຮົາຈະສ້າງຄຸນນະພາບໃຫ້ເກີດຂຶ້ນແນວໃດ? ຖ້າວ່າກຳມະການຂາດຄຸນນະພາບ ຫຼື ບາງເທື່ອກຳມະການຍັງຂາດຄຸນສົມບັດແຕ່ຖືກຕັ້ງຍ້ອນວ່າຄົນຜູ້ນີ້ຈະເວົ້າ ຫຼື ຕັດສິນໄປຕາມເຮົາຊີ້ນຳ, ເວົ້າໃຫ້ສັ້ນ ກຳມະການກໍແມ່ນຄົນຂອງຫົວໜ້າກຳມະການນັ້ນເອງ.

ຖ້າວ່າສິ່ງທີ່ເກີດຂຶ້ນເປັນດັ່ງຜູ້ຂຽນຍົກຕົວຢ່າງ ຍ່ອມຈະຖາມຫາຄຸນນະພາບບໍ່ໄດ້ເລີຍ, ບໍ່ໄດ້ສູງ ເພາະມາດຕະຖານຄຸນສົມບັດຂອງກຳມະການຕໍ່າ; ສຸດທ້າຍກໍເຂົ້າທຳນອງຢູ່ໃນວົງວິນທີ່ວ່າ ມວຍກຳມະການ, ເຖິງຈະຕີໄດ້ ແຕ່ບໍ່ຖືກໃຈ ກໍບໍ່ລົງຄະແນນໃຫ້ນໍ! ສະເໜີເປັນຂໍ້ຄິດ.

# ພິທີເຊັນສັນຍາ ໂຄງການປັບເດີ່ນ ແລະ ກໍ່ສ້າງ ກຳແພງຫ້ອງການ ສພຂ ວຽງຈັນ ຫຼັງໃໝ່




(ສພຂ) -ວັນທີ 15 ພະຈິກຜ່ານມາ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ(ສພຂ)ວຽງຈັນ ໄດ້ຈັດພິທີເຊັນສັນຍາ ໂຄງການປັບເດີ່ນແລະກໍ່ສ້າງກຳແພງຫ້ອງການ ສພຂ ວຽງຈັນ ຫຼັງໃໝ່ ລະຫວ່າງ ສພຂ ແລະ ບໍລິສັດວິໄລໂຊກ ພັດທະນາຄົບວົງຈອນ ຈຳກັດຜູ້ດຽວ; ຕາງໜ້າ ສພຂ ໂດຍທ່ານ ຄຳຫຼ້າ ສີສຸວົງ ເລຂາທິການ ສພຂ ແລະ ຕາງໜ້າຜູ້ຮັບເໝົາໂດຍທ່ານ ນິບພະຈອນ ບຸນວິໄລ ປະທານບໍລິສັດວິໄລໂຊກພັດທະນາຄົບວົງຈອນຈຳກັດຜູ້ດຽວ; ມີທ່ານບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງ; ຄະນະປະຈຳສະພາ, ພະແນກການທີ່ກ່ຽວຂ້ອງ ແລະ ພະນັກງານທັງສອງຝ່າຍ ເຂົ້າຮ່ວມເປັນສັກຂີພະຍານ.

ທ່ານ ສາຍສະໝອນ ວໍລະຈິດ ຮອງເລຂາທິການສະພາປະຊາຊົນແຂວງ ໄດ້ຂຶ້ນຜ່ານສັນຍາຮັບເໝົາ ເຊິ່ງທ່ານໃຫ້ຮູ້ວ່າ: ໂຄງການປັບເດີ່ນ ແລະ ກໍ່ສ້າງກຳແພງ ຫ້ອງການ ສພຂ (ຫຼັງໃໝ່) ມີມູນຄ່າ 8.630 ລ້ານກີບ ໂດຍຈະເລີ່ມຈັດຕັ້ງປະຕິບັດວັນທີ 1 ມັງກອນ 2026-ວັນທີ 30 ມິຖຸນາ 2027; ຈາກນັ້ນ, ໄດ້ມີການລົງນາມຮ່ວມກັນ.

**(ບຸລາຕີ ແສນທະວົງ)**

## ຄວາມຫຍຸ້ງຍາກ...

(ຕໍ່ຈາກໜ້າ 1)

ປະທານສະພາແຫ່ງຊາດ, ທ່ານສະເຫຼີມໄຊ ກົມມະສິດ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ ໄດ້ລາຍງານກ່ຽວກັບການສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ນັບແຕ່ປີ 2021 ເຖິງປີ 2025ເຊິ່ງຜ່ານການຈັດຕັ້ງບັນດາມາດຕະການ ແລະ ວຽກຈຸດສຸມໃນ 5 ດ້ານ ນັບແຕ່ປີ 2021 ເປັນຕົ້ນມາ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນມີລັກສະນະຜ່ອນຄາຍລົງ ແລະກ້າວໄປສູ່ສະຖຽນລະພາບເທື່ອລະກ້າວ ຄື:

1. ການຂະຫຍາຍຕົວເສດຖະກິດ: GDP ມີຈັງຫວະເພີ່ມຂຶ້ນຈາກລະດັບ 3.5% ໃນປີ2021 ມາຢູ່ໃນລະດັບ4.3% ໃນປີ 2024 ແລະ ຄາດວ່າຈະບັນລຸ 4.8% ໃນປີ 2025.

2. ດ້ານເສດຖະກິດມະຫາພາກ: ອັດຕາເງິນເຟີ້ ສະເລ່ຍຢູ່ໃນລະດັບ 17.97% ຕໍ່ປີ (ຄາດໝາຍ: ອັດຕາເງິນເຟີ້ ໄລຍະປີ 2021-2025 ສະເລ່ຍຢູ່ໃນລະດັບບໍ່ເກີນ6%), ສະເພາະອັດຕາເງິນເຟີ້ເດືອນ 9/2025 ຢູ່ໃນລະດັບ4.5%; ອັດຕາແລກປ່ຽນຂອງລະບົບທະນາຄານ: ເງິນກີບທຽບເງິນໂດລາ ອ່ອນຄ່າ 15.16% (ຄາດໝາຍ: ອັດຕາແລກປ່ຽນໃຫ້ໝັ້ນຄົງໃນລະດັບບໍ່ສ້າງແຮງກົດດັນຕໍ່ອັດຕາເງິນເຟີ້); ຄັງສຳຮອງເງິນຕາຕ່າງປະເທດ ສາມາດກຸ້ມການນຳເຂົ້າໄດ້ເພີ່ມຂຶ້ນຈາກ 4.4 ເດືອນມາເປັນ 5.28 ເດືອນ (ຕົວເລກເບື້ອງຕົ້ນ)(ຄາດໝາຍ:ສາມາດກຸ້ມການນຳເຂົ້າໄດ້ບໍ່ຫຼຸດ 3 ເດືອນ); ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນຂອງ ທທກ (NPLs) ຢູ່ໃນລະດັບ 1.41% (ຕົວເລກເບື້ອງຕົ້ນ) (ຄາດໝາຍ: ບໍ່ເກີນ 3% ຂອງຍອດສິນເຊື່ອທັງໝົດ); ສາມາດຄຸ້ມຄອງລາຍຮັບຈາກການສົ່ງອອກ ໄດ້ 72.67% (ຄາດໝາຍ: ບໍ່ຫຼຸດ 70% ຂອງມູນຄ່າສົ່ງອອກບໍ່ລວມຫົວໜ່ວຍທີ່ໄດ້ຮັບການຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍ); ມູນຄ່າການສົ່ງອອກ ເພີ່ມຂຶ້ນ 5.37 ຕື້ໂດລາ ໃນປີ 2020 ມາເປັນ 8.6 ຕື້ໂດລາ ໃນປີ 2024 ແລະ ໄລຍະ 9 ເດືອນຕົ້ນປີ 2025 ໄດ້ປະມານ 9.2 ຕື້ໂດລາ.

3. ດ້ານງົບປະມານມີຄວາມເຂັ້ມແຂງຫຼາຍຂຶ້ນ ໂດຍສະເພາະຖານລາຍຮັບງົບປະມານພາຍໃນຈາກລະດັບ14%ຂອງ GDP ໃນປີ 2021 ກ້າວມາເປັນ 17.6% ຂອງ GDP ໃນປີ 2024 (ລາຍຮັບທັງໝົດບັນລຸໄດ້ 16% ຂອງ GDP ໃນປີ 2021 ມາເປັນ 19.08% ຂອງ GDP ໃນປີ 2024 ແລະ ຄາດວ່າຈະຢູ່ໃນລະດັບ19.9%ຂອງ GDP ໃນປີ 2025) ແລະ ດຸນງົບປະມານ ກ້າວໄປສູ່ສະພາບດຸນງົບປະມານເກີນດຸນ, ສາມາດປະຄັບປະຄອງການຊຳລະໜີ້ສິນສາທາລະນະ, ລະດັບໜີ້ຕ່າງປະເທດຄ່ອຍໆຫຼຸດລົງ ເຊິ່ງປັດຈຸບັນຢູ່ໃນລະດັບ 88%.

## ທຳລາຍ...

(ຕໍ່ຈາກໜ້າ 1)

ກະຊວງປ້ອງກັນຄວາມສະຫງົບ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະ 5 ປີ (2021-2025) ເຊິ່ງໃນນັ້ນໃຫ້ຮູ້ວ່າ:

-ມ້າງຄະດີໄດ້21,003 ເລື່ອງ, ຈັບຜູ້ຖືກຫາ 31,289 ຄົນ/ຍິງ 3,254 ຄົນ, ຕ່າງປະເທດ 938 ຄົນ/ຍິງ 85 ຄົນ; ຢຶດເຮໂຣອິນ 1,852 ກິໂລ (ກລ), ຢາບ້າ 69,261 ກລ, ຢາຝິ່ນ 574 ກລ, ຢາໄອສ໌ 17,386 ກລ, ຄັນຊາ 27,626 ກລ, ເຄຕາມິນ 7,972 ກລ, ໂຄເຄນ 4 ກລ, ຢາອີ 16,519 ເມັດ ກັບ 92 ກລ, ແປ້ງຝຸ່ນປະສົມຢາເສບຕິດ103,348ກລ, ຄາເຟອິນ 168 ກຼາມ, ນ້ຳຢາສານເຄມີ 10 ກລ, 101 ຖັງ 905 ຕຸກ, ນ້ຳກົດ 9,400 ລິດ, ລົດໃຫຍ່ 649 ຄັນ, ລົດຈັກ 3,377 ຄັນ, ເຮືອ 5 ລຳ.

- ກວດພົບເນື້ອທີ່ລັກລອບປູກຝິ່ນ 5,656 ເຮັກຕາ, ທຳລາຍໄດ້ 2,029 ເຮັກຕາ.

- ຜູ້ຕິດຢາເສບຕິດເຂົ້າມາປິ່ນປົວຢູ່ສູນບຳບັດປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ 15 ແຫ່ງ ມີ 34,678 ຄົນ/ຍິງ 1,441 ຄົນ (ໃນນັ້ນ, ປິ່ນປົວດີແລ້ວກັບຄືນບ້ານ 20,301 ຄົນ/ຍິງ 969 ຄົນ, ສືບຕໍ່ປິ່ນປົວໃນປີ 2025 ມີ 3,582 ຄົນ/ຍິງ 132 ຄົນ); ສ້າງໜ່ວຍງານປິ່ນປົວ ແລະ ໃຫ້ຄຳປຶກສາຜູ້ຕິດຢາເສບຕິດຂັ້ນຊຸມຊົນຢູ່ໂຮງໝໍເມືອງ28ແຫ່ງ ຂອງ 6 ແຂວງ ຄື: ໄຊຍະບູລີ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ ແລະ ນະຄອນຫຼວງວຽງຈັນ ມີຜູ້ເຂົ້າມາຮັບຄຳປຶກສາ 2,567 ເທື່ອຄົນ/ຍິງ 163 ເທື່ອຄົນ.

- ມີບ້ານປອດຢາເສບຕິດ 3.222ບ້ານ, ສ້າງບ້ານປອດຄະດີ 2.899 ບ້ານ; ສ້າງໂຮງຮຽນ, ສະຖາບັນການສຶກສາປອດຢາເສບຕິດ 5.917 ໂຮງຮຽນ; ສ້າງສະຖານທີ່ປອດຢາເສບຕິດ 38 ກົມກອງຂະແໜງການ, ສ້າງບ້ານຄູ່ຂະໜານສີຂາວປອດຢາເສບຕິດ 20 ບ້ານ (ກັບປະເທດໄທ 17 ບ້ານ, ກັບປະເທດກຳປູເຈຍ 3 ບ້ານ).

## ຂະຫຍາຍ...

(ຕໍ່ຈາກໜ້າ 1)

2) ປັບປຸງໂຄງລ່າງດ້ານສາທາລະນະສຸກທັງສູນກາງ ແລະ ທ້ອງຖິ່ນ, ວຽກງານສົ່ງເສີມສຸຂະພາບແມ່ ແລະ ເດັກ, ວຽກງານກອງທຶນປະກັນສັງຄົມ ແລະ ປະກັນສຸຂະພາບ, ວຽກງານສັກວັກຊີນກັນພະຍາດ ແລະ ວຽກງານຮັກສາສຸຂະພາບຂັ້ນຕົ້ນ ແລະ ການສ້າງຄວາມເຂັ້ມແຂງວຽກງານສະກັດກັ້ນ ແລະ ເຝົ້າລະວັງການແຜ່ລະບາດຂອງພະຍາດຕ່າງໆຕາມລະດູການ.

3)ພັດທະນາກຳລັງແຮງງານໃຫ້ມີສີມື ແລະ ເຂົ້າສູ່ຕະຫຼາດແຮງງານທັງພາຍໃນ ແລະ ຕ່າງປະເທດ; ພັດທະນາລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ ເພື່ອສະໜອງຂໍ້ມູນໃຫ້ແກ່ການດັດສົມ, ການສະໜອງກຳລັງແຮງງານ ໃຫ້ເຂົ້າເຖິງ ຕຳແໜ່ງງານ ແລະ ຜູ້ໃຊ້ແຮງງານ.

4)ເອົາໃຈໃສ່ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີຕໍ່ພາລະກິດປະຕິວັດຊາດປະຊາທິປະໄຕ ແລະ ສືບຕໍ່ການຂະຫຍາຍຕາໜ່າງປົກປ້ອງທາງສັງຄົມ ໃຫ້ມີອັດຕາການປົກຄຸມຫຼາຍຂຶ້ນ.

5) ປັບປຸງວຽກງານຖະແຫຼງຂ່າວ ໃຫ້ມີຄວາມວ່ອງໄວ ແລະ ທັນສະໄໝ, ຫຼາກຫຼາຍ ທັງສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນ ທັງເອົາໃຈໃສ່ຄວບຄຸມສື່ສັງຄົມອອນລາຍ ໂດຍການປັບປຸງໂຄງລ່າງພື້ນຖານດ້ານສື່ມວນຊົນ, ພ້ອມທັງສ້າງຄວາມເຂັ້ມແຂງໃຫ້ບຸກຄະລາກອນດ້ານປະລິມານ ແລະ ຄຸນນະພາບ; ສົ່ງເສີມແລະອະນຸລັກວັດທະນະທຳ ແລະຮີດຄອງປະເພນີຂອງຊາດ.

6) ຊຸກຍູ້ສົ່ງເສີມການທ່ອງທ່ຽວ ໃຫ້ເຂົ້າເຖິງກຸ່ມຕະຫຼາດເປົ້າໝາຍ ໂດຍສົມທົບແໜ້ນກັບທຸກພາກສ່ວນທັງພາກລັດ ແລະ ເອກະຊົນໃນທົ່ວສັງຄົມ; ສຸມໃສ່ປັບປຸງພື້ນຖານໂຄງລ່າງ ເປັນຕົ້ນ ສະຖານທີ່ທ່ອງທ່ຽວ, ເສັ້ນທາງ ແລະ ສິ່ງອຳນວຍຄວາມສະດວກດ້ານການທ່ອງທ່ຽວອື່ນໆ.

7)ສຸມໃສ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢູ່ບັນດາເຂດຈຸດສຸມຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ ຂອງລັດຖະບານ ແລະ ຂອງທ້ອງຖິ່ນໂດຍສະເພາະເຂດຫ່າງໄກສອກຫຼີກ, ເຂດຊາຍແດນ ແລະ ເຂດພື້ນຖານການປະຕິວັດໃນເມື່ອກ່ອນ.

# ກອງປະຊຸມຮ່ວມລະຫວ່າງ ສພຂ ກັບ ຄະນະກຳມະການປົກຄອງແຂວງ



(ສພຂ) - ວັນທີ 19 ພະຈິກຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ, ໄດ້ດຳເນີນກອງປະຊຸມຮ່ວມ ກັບຄະນະກຳມະການປົກຄອງແຂວງ ເພື່ອຄົ້ນຄວ້າປຶກສາຫາລື ແລະ ເອກະພາບ ຕໍ່ບັນດາເນື້ອໃນທີ່ຈະນຳເຂົ້າຄົ້ນຄວ້າ ພິຈາລະນາ ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຂ ບໍລິຄຳໄຊ ຊຸດທີ IV ໂດຍການເປັນປະທານຮ່ວມຂອງທ່ານ ໃສຄຳ ທອງລັດ ຮອງປະທານສະພາປະຊາຊົນແຂວງແລະທ່ານ ສົມໃຈ ຄຸນພະໄຊ ຄະນະປະຈຳພັກແຂວງ, ຮອງປະທານຄະນະກຳມະການປົກຄອງແຂວງ; ເຂົ້າຮ່ວມມີຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ), ຄະນະເລຂາທິການສະພາປະຊາຊົນແຂວງ, ຫົວໜ້າພະແນກການ, ຫົວໜ້າກອງບັນຊາການ ແລະ ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການຕີລາຄາການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຂ ຊຸດທີ IV ທີ່ຜ່ານມາທັງປຶກສາຫາລື, ປະກອບຄຳຄິດເຫັນ ແລະ ເອກະພາບ ກຳນົດເອົາບັນດາເນື້ອໃນທີ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຂ ຊຸດທີ IV ເຊິ່ງຈະໄດ້ຄົ້ນຄວ້າ , ພິຈາລະນາ, ຮັບຮອງ ເປັນຕົ້ນບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ປະຈຳປີ 2025, ປະຈຳ 5 ປີ (2021-2025) ແລະ ທິດທາງແຜນການປີ 2026; ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃນໄລຍະ 5 ປີ (2023-2025) ແລະ ທິດທາງຕໍ່ໜ້າ; ບົດລາຍງານ ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະ 5 ປີ (2023-2025) ແລະ ທິດທາງຕໍ່ໜ້າ; ບົດລາຍງານ ການຈັດຕັ້ງປະຕິບັດເງິນເກີນແຜນປີ2024ແລະການດັດແກ້ງົບປະມານ; ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2025, ປະຈຳ 5 ປີ (2021-2025) ແລະ ທິດທາງແຜນການ ປະຈຳປີ 2026 ຂອງອົງການກວດສອບພາກພາກ; ບົດລາຍງານ ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານ ປະຈຳປີ 2024 ແລະ ການຈັດຕັ້ງປະຕິບັດຄຳແນະນຳຂອງອົງການກວດສອບໃນປີຜ່ານມາ; ບົດລາຍງານ ການເຄື່ອນໄຫວວຽກງານ ປະຈຳປີ 2025; ປະຈຳ 5 ປີ (2021-2025) ແລະ ທິດທາງແຜນການປະຈຳປີ 2026 ຂອງອົງການກວດກາລັດແຂວງ;ບົດລາຍງານຜົນການກວດກາ ຕາມຜົນການກວດສອບ ປີ 2023 ຂອງອົງການກວດກາລັດແຂວງ; ບົດລາຍງານ ການເຄື່ອນໄຫວວຽກງານປະຈຳປີ 2025, ປະຈຳ 5 ປີ (2021-2025) ແລະ ທິດທາງແຜນການ ປະຈຳປີ 2026 ຂອງອົງການໄອຍະການປະຊາຊົນແຂວງ; ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2025, ປະຈຳ 5 ປີ (2021-2025) ແລະ ທິດທາງແຜນການ ປະຈຳປີ 2026 ຂອງສານປະຊາຊົນແຂວງແລະພິຈາລະນາຮັບຮອງເອົາການສະເໜີສ້າງຕັ້ງຕາແສງຂອງແຂວງຕາມການສະເໜີຂອງຄະນະກຳມະການປົກຄອງແຂວງ.

**(ໂສລະຢ້າ ໄຊຍະວົງ)**

## ຜົນເສຍຫາຍ...

(ຕໍ່ຈາກໜ້າ 1)

2025 ແລະ ແຜນການເຄື່ອນໄຫວວຽກງານ 5 ປີ (2026-2030), ປະຈຳປີ 2026 ຂອງອົງການກວດກາແຫ່ງລັດ; ຜົນການກວດກາຕາມຜົນການກວດສອບປີ 2023 ຂອງອົງການກວດກາແຫ່ງລັດ ເຊິ່ງທ່ານໃຫ້ຮູ້ວ່າ:

ວຽກກວດກາການບໍລິຫານລັດ

1. ວຽກກວດກາປົກກະຕິ: ຕິດຕາມ, ກວດກາໂຄງການລົງທຶນຂອງລັດແຕ່ຫົວທີ 77 ໂຄງການມູນຄ່າ188,101.63 ຕື້ກີບ, 7.63 ລ້ານໂດລາ ແລະ 37.40 ຕື້ຢວນ; ໃນນັ້ນ, ສຳເລັດ 6 ໂຄງການ, ຍັງສືບຕໍ່ 71 ໂຄງການ. ສຳລັບໂຄງການຂົນສົ່ງແບບຍືນຍົງໃນຕົວເມືອງນະຄອນຫຼວງວຽງຈັນ ຫຼື ລົດເມດ່ວນ BRT ເຊິ່ງໄດ້ລິເລີ່ມແຕ່ປີ 2014 ໃຊ້ງົບປະມານການລົງທຶນ99.70ລ້ານໂດລາໂດຍມີທຶນມາຈາກ 7 ແຫຼ່ງ, ສະພາແຫ່ງຊາດໄດ້ຮັບຮອງໂຄງການເຂົ້າໃນແຜນການລົງທຶນຂອງລັດປີ 2017 ມູນຄ່າ 1,091 ຕື້ກີບ; ບັນຫາທີ່ພົບເຫັນ 1) ຄວາມຄືບໜ້າໂຄງການຖ້າທຽບໃສ່ແຜນການຊ້າກວ່າ24ເດືອນ (ລວມທຸກໜ້າວຽກປະຕິບັດໄດ້ 79.25%, ໂຄງລ່າງພື້ນຖານ 5 ສັນຍາປະຕິບັດໄດ້85.35%); 2) ແບບແຕ້ມກໍ່ສ້າງຂອງໂຄງການຍັງບໍ່ໄດ້ຖືກຮັບຮອງຈາກທີ່ປຶກສາ ແລະ ພາກສ່ວນກ່ຽວຂ້ອງ; 3) ອຸປະກອນທີ່ຕິດຕັ້ງພາຍໃນລົດເມ, ສະຖານີລົດເມ ແລະ ອູ່ລົດເມ ຍັງບໍ່ໄດ້ຖືກຮັບຮອງຢັ້ງຢືນມາດຕະຖານຈາກຂະແໜງການກ່ຽວຂ້ອງ; 4) ການເບີກຈ່າຍຊຳລະບໍ່ຜ່ານສິນເຊື່ອຂອງທະນາຄານແຫ່ງສປປລາວກຳນົດ; 5) ການວ່າຈ້າງທີ່ປຶກສາມູນຄ່າ 10.98 ລ້ານໂດລາ ເທົ່າກັບ 11% ເຫັນວ່າສູງທຽບໃສ່ດຳລັດ 431/ລບ, ລົງວັນທີ 26 ພະຈິກ 2014 ໄດ້ກຳນົດບໍ່ເກີນ 2%.

2. ວຽກກວດກາຕາມຄຳສັ່ງ:

1)ກວດກາການບຸກລຸກທີ່ດິນຂອງລັດ, ເນື້ອທີ່ເຂດປ່າຜະລິດ, ປ່າປ້ອງກັນ ແລະ ການຕັດໄມ້ ຢູ່ແຂວງອັດຕະປື ພົບເຫັນການບຸກເບີກເນື້ອທີ່ໂດຍບໍ່ໄດ້ຮັບອະນຸຍາດ, ບຸກເບີກເກີນຂອບເຂດ ແລະ ການຊື້-ຂາຍໃບແຈ້ງທີ່ດິນໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ; ໃນນີ້ບໍລິສັດຊື້ທີ່ດິນໂດຍບໍ່ມີໃບແຈ້ງ297ເຮັກຕາ(ຮຕ) ແລະ ຊື້ໃບແຈ້ງທີ່ດິນ 1,302 ຮຕ ນອນໃນເຂດປ່າປ້ອງກັນພູພຽງບໍລິເວນ ແລະ ນອນໃນປ່າຜະລິດ, ມີພະນັກງານທີ່ພົວພັນກັບການອະນຸມັດ 32 ຄົນ.

2) ກວດກາໜີ້ຕ້ອງຮັບ-ໜີ້ຕ້ອງສົ່ງ ໃນໂຄງການກໍ່ສ້າງເຂື່ອນ ແລະ ສາຍສົ່ງກະແສໄຟຟ້າ 237 ລ້ານໂດລາ ເຊິ່ງມາຮອດປັດຈຸບັນ ຍັງກວດກາບໍ່ທັນສຳເລັດ.

3) ກວດກາການນຳເຂົ້າພາຫະນະ (ລົດໃຫຍ່) ຈາກຕ່າງປະເທດ ເຊິ່ງສາມາດຍຶດ 23 ຄັນ, ສົ່ງຄືນໃຫ້ເຈົ້າໜ້າທີ່ຂອງປະເທດທີ່ຖືກລັກນຳເຂົ້າມາ6 ຄັນແລະມີບຸກຄົນທີ່ພົວພັນກັບການລະເມີດກົດໝາຍ17ຄົນ,ຍິງ2ຄົນ.

4) ກວດກາກອງສະໜາມບິນລາວ ແລະ ກອງຈະລາຈອນທາງອາກາດລາວ ທີ່ຂຶ້ນກັບກົມການບິນພົນລະເຮືອນ, ກະຊວງໂຍທາທິການ ແລະ ຂົນສົ່ງ ພົບເຫັນວ່າ: ມູນຄ່າລາຍຈ່າຍໃນ 15 ສັນຍາ 19.25 ຕື້ກີບ ມີການປະຕິບັດໜ້າວຽກຈຳນວນໜຶ່ງຍັງບໍ່ຄົບຖ້ວນຕາມສັນຍາ, ການສະໜອງວັດຖຸອຸປະກອນ ມີລາຄາສູງເກີນຈາກລາຄາທ້ອງຕະຫຼາດ, ໃຊ້ວັດສະດຸບໍ່ໄດ້ຄຸນນະພາບມາດຕະຖານເຊິ່ງລວມມູນຄ່າເສຍຫາຍ 1.70 ຕື້ກີບ, ໃນນີ້ ເກັບກູ້ຄືນໄດ້ 862.73 ລ້ານກີບ ແລະ ຍັງສືບຕໍ່ເກັບ 838.64 ລ້ານກີບ.

ວຽກສອບສວນການສໍ້ລາດບັງຫຼວງ: ດຳເນີນການສືບສວນ-ສອບສວນ 18 ເປົ້າໝາຍ; ມີຜົນເສຍຫາຍ 642.93 ຕື້ກີບ, 68.95 ລ້ານບາດ, 7.80 ລ້ານຢວນ, 66.8 ລ້ານໂດລາ ແລະ 1.5 ຕື້ດົງ; ເກັບກູ້ໄດ້ 66.40 ຕື້ກີບ, 6.49 ລ້ານບາດ, 5.19 ລ້ານຢວນ, 7.29 ລ້ານໂດລາ ແລະ ຊັບສິນອື່ນໆ; ມີຜູ້ກ່ຽວຂ້ອງ 334 ຄົນ, ໃນນີ້ ພະນັກງານລັດ 212 ຄົນ, ພະນັກງານລັດວິສາຫະກິດ 44 ຄົນ, ຕ່າງປະເທດ 2 ຄົນ ແລະ ບຸກຄົນອື່ນໆ 77 ຄົນ; ໃນ 18 ເປົ້າໝາຍນີ້, ດຳເນີນການສືບສວນ-ສອບສວນສຳເລັດ13ເປົ້າໝາຍ, ຂະຫຍາຍຜົນຕໍ່ຜູ້ກ່ຽວຂ້ອງ312 ຄົນ, ໃນນີ້ສະຫຼຸບສົ່ງໄອຍະການສັ່ງຟ້ອງ 86 ຄົນ (ສານຕັດສິນແລ້ວ 23 ຄົນ), ແກ້ໄຂຕາມລະບຽບບໍລິຫານ 207 ຄົນ. ສະເພາະໃນປີ 2025 ໄດ້ດຳເນີນການສືບສວນ-ສອບສວນ6ເປົ້າໝາຍ, ມີຜູ້ກ່ຽວຂ້ອງ 59 ຄົນ.

## ສ້າງນິຕິກຳ...

(ຕໍ່ຈາກໜ້າ 1)

ຕິດ ແລະ ເຜີຍແຜ່ລະບຽບກົດໝາຍ, ສ້າງສະຕິເຄົາລົບ ແລະ ປະຕິບັດກົດໝາຍ ໃຫ້ທົ່ວສັງຄົມຢ່າງແຂງແຮງດ້ວຍຫຼາຍຮູບການ, ວິທີການ ໂດຍເນັ້ນໃຫ້ທຸກພາກສ່ວນເປັນເຈົ້າການດຳເນີນການແກ້ໄຂຢ່າງຈິງຈັງ.

2. ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ໃຫ້ຄົບຖ້ວນຮັດກຸມຕື່ມ ໂດຍສະເພາະນິຕິກຳປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ຄວນເດັດຂາດແທ້ ເຊັ່ນ: ການແກ້ໄຂວັດຖຸຂອງກາງຄະດີຕ້ອງອາຍັດຫຼືຍຶດເປັນຂອງລັດ, ສ້າງນິຕິກຳກ່ຽວກັບການປະຕິບັດໂທດປະຫານຊີວິດຄະດີຢາເສບຕິດ ໃຫ້ເປັນຮູບປະທຳ ເພາະວ່າທີ່ຜ່ານມາເຫັນວ່າມີການຕັດສິນໂທດປະຫານຊີວິດຫຼາຍ ແຕ່ບໍ່ໄດ້ຈັດຕັ້ງປະຕິບັດ ເຮັດໃຫ້ເປັນຊ່ອງວ່າງ ກະທົບເຖິງຄວາມສັກສິດຂອງກົດໝາຍ.

3. ປັບປຸງກົງຈັກການຈັດຕັ້ງແກ້ໄຂບັນຫາຢາເສບຕິດຂັ້ນເມືອງ, ຂັ້ນຕາແສງແລະຂັ້ນບ້ານ ໃຫ້ເປັນຂະບວນການແຂງແຮງ; ປັບປຸງຍົກລະດັບພະນັກງານອົງການສືບສວນ-ສອບສວນ, ສານ, ໄອຍະການ ໃຫ້ດຳເນີນຄະດີຢາເສບຕິດໃຫ້ວ່ອງໄວ, ທັນການກວ່າເກົ່າ, ບໍ່ແກ່ຍາວ, ຖ່ວງດຶງເວລາ; ປັບປຸງຍົກລະດັບປະສິດທິພາບການວິເຄາະ, ວິໄຈສານເສບຕິດໃຫ້ວ່ອງໄວ ແລະ ມີຄວາມຮັບປະກັນ.

4. ຍົກສູງວຽກງານແກ້ໄຂຮອບດ້ານຕໍ່ຄະດີຢາເສບຕິດ ໂດຍປະຕິບັດເຂັ້ມງວດ 3 ຫຼັກການ: ເດັດຂາດ, ໂປ່ງໃສ ແລະ ທັນເປັນມືອາຊີບ ຂອງເຈົ້າໜ້າທີ່ ດ້ວຍປະສິດທິຜົນສູງກວ່າເກົ່າ; ການແກ້ໄຂຄະດີຢາເສບຕິດ ຕ້ອງໂປ່ງໃສ ແລະ ເປີດເຜີຍຕໍ່ສັງຄົມ ໂດຍສະເພາະກໍລະນີຈັບໄດ້ແຕ່ຂອງກາງຄະດີ, ແຕ່ບໍ່ສາມາດຈັບຕົວຜູ້ກະທຳຜິດໄດ້.

5. ຍົກສູງບົດບາດການຈັດຕັ້ງລະບົບການເມືອງຢູ່ຮາກຖານ ໃນການເປັນເຈົ້າການສະກັດກັ້ນ, ປາບປາມຢາເສບຕິດແຕ່ຫົວທີ; ຕິດແໜ້ນສະຖາບັນຄອບຄົວ, ສະຖາບັນການສຶກສາ ແລະ ຫົວໜ່ວຍການຈັດຕັ້ງທຸລະກິດ, ກິດຈະການຕ່າງໆ; ຕິດຕາມ, ຊຸກຍູ້ຂະບວນການສ້າງບ້ານປອດຢາເສບຕິດ, ໂຮງຮຽນ ຫຼື ສະຖານການສຶກສາປອດຢາເສບຕິດ ຕາມເນື້ອໃນມະຕິ 110/ສພຊ.

6. ສືບຕໍ່ແກ້ໄຂບັນຫາຄວາມແອອັດຂອງສະຖານທີ່ຄຸມຂັງ, ສູນບຳບັດປິ່ນປົວ; ປະກອບວັດຖຸອຸປະກອນ, ຢາ ທີ່ຈຳເປັນ; ຈັດຕັ້ງເຝິກອົບຮົມວິຊາຊີບ, ປະກອບວຽກເຮັດງານທຳໃຫ້ນັກໂທດ, ຜູ້ຖືກຕ້ອງຫາ ໃຫ້ໄດ້ອອກແຮງງານສ້າງລາຍຮັບ.

7. ເພີ່ມທະວີການພົວພັນຮ່ວມມືສາກົນແລະພາກພື້ນ ໃນການແກ້ໄຂຢາເສບຕິດ ໂດຍສະເພາະບັນດາປະເທດທີ່ຊາຍແດນຕິດຈອດ ສປປລາວ ຫຼື ປະເທດຄູ່ເຈລະຈາ, ຄູ່ຮ່ວມມືຕາມກົນໄກທີ່ມີຢ່າງແຂງແຮງ ແລະ ເປັນເຈົ້າການ.

ບັນຫາຕັດສິນແມ່ນຕ້ອງໄດ້ເພີ່ມທະວີການນຳພາຊີ້ນຳປຸກລະດົມຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ໃຫ້ເປັນຂອງປວງຊົນຢ່າງແທ້ຈິງ; ພັດທະນາເສດຖະກິດໃຫ້ຮັ່ງມີ, ເຂັ້ມແຂງ, ສັງຄົມຍຸຕິທຳ, ປະຊາຊົນມີຢູ່ມີກິນ, ມີລາຍຮັບທີ່ໝັ້ນຄົງ, ຊີວິດການເປັນຢູ່ຂອງພະນັກງານ, ທະຫານ, ຕຳຫຼວດ ໄດ້ຮັບການຍົກສູງຂຶ້ນຢ່າງບໍ່ຢຸດຢັ້ງ; ເອົາໃຈໃສ່ພັດທະນາຍິງໜຸ່ມ-ຊາຍໜຸ່ມ ໃຫ້ມີຄວາມຫ້າວຫັນ, ກະຕືລືລົ້ນໃນການເຝິກຝົນຫຼໍ່ຫຼອມຕົນເອງ ແລະ ມີອາຊີບຄົງທີ່ໝັ້ນທ່ຽງ ແລະ ບໍ່ໄປຫຍຸ້ງກ່ຽວກັບສິ່ງເສບຕິດ.



ສຸຂະສະບາຍຫາຍໂຣຄາ

## ຄວາມສ່ຽງທີ່ມາກັບໂລກອ້ວນ

**# ຮຽບຮຽງໂດຍ: ດອກໄມ້ປ່າ**

- ໃນສະພາບສັງຄົມທີ່ເລັ່ງດ່ວນໃນປັດຈຸບັນ ສິ່ງຜົນໃຫ້ພຶດຕິກຳການບໍລິໂພກຂອງຄົນໃນສັງຄົມປ່ຽນແປງໄປ ມີອາຫານຫຼາຍປະເພດທີ່ຖືກຜະລິດຂຶ້ນເພື່ອອຳນວຍຄວາມສະດວກໃຫ້ຜູ້ບໍລິໂພກໃນຊີວິດປະຈຳວັນ ເຊິ່ງມັນອາດຈະສ່ຽງຕໍ່ໂຣກໄພໄຂ້ເຈັບທີ່ຈະຕາມມາເຊັ່ນດຽວກັນ ພະຍາດທີ່ເກີດຈາກພຶດຕິກຳການບໍລິໂພກຜິດໆນັ້ນ ເປັນພະຍາດໃກ້ໂຕ ແລະ ມັກພົບຫຼາຍທີ່ສຸດນັ້ນຄື: ໂຣກອ້ວນ.

ແພດຜູ້ຊ່ຽວຊານເຜີຍວ່າ: "ນອກຈາກໂຣກອ້ວນຈະສົ່ງຜົນກະທົບໃຫ້ຜູ້ປ່ວຍເກີດໂລກຄວາມດັນເລືອດສູງ, ເບົາຫວານແລະ ໂຣກຫົວໃຈແລ້ວ ແຕ່ໂຣກອ້ວນຍັງສາມາດເຮັດໃຫ້ຜູ້ປ່ວຍຕາບອດໄດ້ຕື່ມອີກ"

ນັກວິໄຈກ່າວຕໍ່ວ່າ ການປ່ວຍເປັນໂຣກອ້ວນມີຄວາມສ່ຽງຕໍ່ການເກີດພາວະຄວາມດັນໃນໂພງສະໝອງ ເຊິ່ງຈະເຮັດໃຫ້ມີອາການວິນຫົວປວດຮາກ, ເບິ່ງບໍ່ເຫັນແຈ້ງ ຫຼື ຮຸນແຮງ ຈົນອາດເຮັດໃຫ້ເກີດພາວະແຊກຊ້ອນເຖິງຂັ້ນຕາບອດໄດ້.

ໂຣກອ້ວນ ເປັນໂລກທີ່ສົ່ງຜົນກະທົບໃຫ້ເກີດໂຣກຫຼວງຫລາຍຢ່າງໜ້າຕົກໃຈ; ສະນັ້ນ, ສິ່ງທີ່ສຳຄັນທີ່ສຸດຄືເລື່ອງໂພຊະນາການແລະພຶດຕິກຳການບໍລິໂພກຂອງຜູ້ບໍລິໂພກນັ້ນເອງ ຕ້ອງຄຳນຶງເຖິງສານອາຫານອັນຄົບຖ້ວນ ເຊັ່ນ: ຜັກ, ໝາກໄມ້ ແລະ ອື່ນໆ ລວມໄປເຖິງການໃຫ້ຄວາມສຳຄັນກັບການກິນອາຫານ, ການອອກກຳລັງກາຍທີ່ເໝາະສົມຖືກຕ້ອງເຊິ່ງເປັນສິ່ງສຳຄັນທີ່ຕ້ອງຄຳນຶງເຖິງເປັນອັນດັບທຳອິດກ່ອນທີ່ຈະແກ້ບັນຫາປາຍເຫດ.

**ຂໍ້ມູນຈາກ:**
**www.laopost.com**







## ຄວາມຮູ້ໜ້ອຍ ຢ່າຄິດເປັນຜູ້ນຳ

**# ລູກທາດສາມປາງ**

❈ ຄວາມຮູ້ຍັງອ່ອນນ້ອຍ ປັນຍາຕໍ່າຄົມແຫຼມ
ຢ່າຟ້າວແນມມອງສູງ ກວ່າຕົນທະຍານໄດ້
ປີກອ່ອນໄຫວດຽງສາດ້ອຍ ງອຍຄອນຈັ້ງບໍ່ຢູ່
ຄວາມຮູ້ຍັງຕໍ່າຕ້ອຍ ສະໝອງນ້ອຍອ່ອນພະຫຍາ

❈ ຄວນສຶກສາໄຂວ່ຄົ້ນ ດີກວ່າເດີນທາງລັດ
ຝຶກຫັດທະນາຄົມຄົນ ຕໍ່ໄປຂະຫຍັນສູ້
ຖູປັນຍາເຫຼົ້າສ້ອມ ຮຽນເອົາຝົນຖາກ
ມັນຫາກຄົມດັ່ງຜ້າ ຝົນເຂົ້າເລີກດີ

❈ ມີຫຼາຍຄົນລ່ວງຂ້າມ ເດີນລັດຊຸຊີ
ຊອກວິທີທາງໄປ ໄຝ່ສູງນຳໜ້າ
ເປັນຜູ້ນຳພາແລ້ວ ຄອງເມືອງຄຸ້ມໄຝ່
ຜົນຕາມມາເຮັດບໍ່ໄດ້ ແນວຄວາມຮູ້ອ່ອນພະຫຍາ

❈ ຄວາມຮູ້ເຂີນຕໍ່າແຕ້ມ ຮຽນກ່ອນສຶກສາເອົາ
ຢ່າຟ້າວຮາມຫຸນຫັນ ເຜ່ນສູງຫວັງຂ້າມ
ມັນຊິຕົກວັງນໍ້າ ລອຍບໍ່ເປັນຈົມຈຸ່ມ
ເປັນຄົນຄຸມເພື່ອນພ້ອງ ຄອງບ້ານເມືອງຕ້ອງເກັ່ງກ້າ ນຳພາສ້າງຈຶ່ງຮຸ່ງເຮືອງ....ທ່ານເອີຍ!

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 147 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 17/11/25

### ຂໍ້ຕົກລົງ
### ວ່າດ້ວຍ ການຮັບຮອງເອົາຈຳນວນຕາແສງ ໃນທົ່ວປະເທດ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ (ສະບັບປັບປຸງ) ປີ 2016;
- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ປີ 2025;
- ອີງຕາມ ໜັງສືສະເໜີຂອງ ຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 713/ຄຈສພ, ລົງວັນທີ 13 ພະຈິກ 2025.

ນາຍົກລັດຖະມົນຕີ ຕົກລົງ:

ມາດຕາ 1 ຂໍ້ຕົກລົງສະບັບນີ້ ຮັບຮອງເອົາ ຈຳນວນຫົວໜ່ວຍການປົກຄອງຂັ້ນຕາແສງ ທີ່ເປັນຫົວໜ່ວຍການປົກຄອງຂັ້ນລຸ່ມສຸດຂອງ ສປປ ລາວ ທີ່ຈະສ້າງຕັ້ງ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ ດັ່ງລຸ່ມນີ້:

| ລ/ດ | ແຂວງ | ຫົວໜ່ວຍການປົກຄອງຂັ້ນເມືອງ | ຕາແສງ |
|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 9 | 36 |
| 2 | ຜົ້ງສາລີ | 7 | 33 |
| 3 | ຫຼວງນໍ້າທາ | 5 | 24 |
| 4 | ອຸດົມໄຊ | 7 | 28 |
| 5 | ບໍ່ແກ້ວ | 5 | 23 |
| 6 | ຫຼວງພະບາງ | 12 | 52 |
| 7 | ຫົວພັນ | 10 | 53 |
| 8 | ໄຊຍະບູລີ | 11 | 45 |
| 9 | ຊຽງຂວາງ | 7 | 32 |
| 10 | ວຽງຈັນ | 11 | 46 |
| 11 | ບໍລິຄຳໄຊ | 7 | 26 |
| 12 | ຄຳມ່ວນ | 10 | 44 |
| 13 | ສະຫວັນນະເຂດ | 15 | 67 |
| 14 | ສາລະວັນ | 8 | 38 |
| 15 | ເຊກອງ | 4 | 16 |
| 16 | ຈຳປາສັກ | 10 | 46 |
| 17 | ອັດຕະປື | 5 | 17 |
| 18 | ໄຊສົມບູນ | 5 | 14 |
| | ລວມ | 148 ຫົວໜ່ວຍການປົກຄອງຂັ້ນເມືອງ | 640 ຕາແສງ |

1

ມາດຕາ 2 ມອບໃຫ້ ຄະນະກຳມະການປົກຄອງ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ ສົມທົບກັບຄະນະກຳມະການປົກຄອງຂັ້ນເມືອງ ຄົ້ນຄວ້າ, ກະກຽມຄວາມພ້ອມ ແລະ ປະກາດການສ້າງຕັ້ງຕາແສງ ໃຫ້ຢູ່ໃນກອບຈຳນວນ ທີ່ກຳນົດໄວ້ ໃນມາດຕາໜຶ່ງ ຂອງຂໍ້ຕົກລົງສະບັບ.

ມາດຕາ 3 ມອບໃຫ້ ຄະນະຈັດຕັ້ງສູນກາງພັກ ເປັນເຈົ້າການ ໃນການປະສານສົມທົບ ກັບທຸກພາກສ່ວນ ໃນການກະກຽມຄວາມພ້ອມໃຫ້ແກ່ການສ້າງຕັ້ງຕາແສງ.

ມາດຕາ 4 ມອບໃຫ້ ກະຊວງການເງິນ ຄົ້ນຄວ້າ ທາງດ້ານງົບປະມານ ໃຫ້ແກ່ການຈັດຕັ້ງປະຕິບັດ ແລະ ກົນໄກດ້ານງົບປະມານຂອງຄະນະກຳມະການປົກຄອງຕາແສງ ໃຫ້ມີປະສິດທິພາບ.

ມາດຕາ 5 ບັນດາກະຊວງ, ອົງການຈັດຕັ້ງຂັ້ນ ສູນກາງ ແລະ ທ້ອງຖິ່ນ ຈົ່ງຮັບຮູ້ ແລະ ປະຕິບັດຂໍ້ຕົກລົງ ສະບັບນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 6 ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ

## ສສຊ ...

(ຕໍ່ຈາກໜ້າ 7)

**ທ່ານ ປອ. ສຸວັນນີ ໄຊຊະນະ** ສສຊ ປະຈຳເຂດເລືອກ



ຕັ້ງທີ 11 ແຂວງບໍລິຄຳໄຊ ກ່າວວ່າ: ການເຕີບໂຕທາງດ້ານເສດຖະກິດໃນໄລຍະ 5 ປີຜ່ານມານັ້ນ ເກີດຄວາມບໍ່ສົມດຸນສອງຢ່າງຄື: ບໍ່ສົມດຸນການພັດທະນາເສດຖະກິດກັບຜົນກະທົບຕໍ່ສິ່ງແວດລ້ອມແລະການພັດທະນາເສດຖະກິດກັບການພັດທະນາວັດທະນະທຳ-ສັງຄົມ ບໍ່ໄປສົມຄູ່ກັນ; ສະນັ້ນ, ການພັດທະນາ 5 ປີຕໍ່ໜ້ານີ້ ຄວນສ້າງຄວາມເຂັ້ມແຂງໃຫ້ເສດຖະກິດຮາກຖານຢ່າງແຂງແຮງ ແລະ ສະເໜີວ່າ ການຈັດບຸລິມະສິດອັນດັບໜຶ່ງ ຄວນປ່ຽນແທນໃຫ້ຂະແໜງການອື່ນ ຄວນຈະແມ່ນຂົງເຂດກະສິກຳ ແລະ ອຸດສາຫະກຳປຸງແຕ່ງ ເຮົາຈຶ່ງຈະສາມາດມີພູມຕ້ານທານໃນກໍລະນີສະພາບແວດລ້ອມທາງນອກມີຜົນກະທົບເຊິ່ງຜ່ານມາກໍມີບົດຮຽນແລ້ວໃນປີ 1997 ວິກິດເສດຖະກິດ-ການເງິນແລະປີ2022-2023 ອັດຕາເງິນເຟີ້ເພີ່ມຂຶ້ນຮອດ40% ເນື່ອງຈາກວ່າເສດຖະກິດພວກເຮົາບອບບາງ, SME ກວມ 90% ເມື່ອທຽບໃສ່ການສົ່ງອອກສິນຄ້າກະສິກຳກັບແຮ່ທາດ, ການສົ່ງອອກແຮ່ທາດມູນຄ່າຫຼາຍກວ່າ ແລະ ໃນ 3-4 ປີຜ່ານມາ ເພີ່ມຂຶ້ນສອງເທົ່າ, ແຕ່ການສົ່ງອອກຜະລິດຕະພັນກະສິກຳບັນລຸປະມານ 1,500 ລ້ານໂດລາເຫັນວ່າຍັງຕ່ຳ. ສະນັ້ນ, ແນວທາງເສດຖະກິດເອກະລາດເປັນເຈົ້າຕົນເອງ ແມ່ນເພິ່ງພາຊັບພະຍາກອນ ແລະ ເພິ່ງພາຮາກຖານເສດຖະກິດນີ້ເປັນຕົ້ນຕໍ, ຕໍ່ບັນຫານີ້ ຈຶ່ງຢາກສະເໜີໃຫ້ລັດຖະບານພິຈາລະນາຢ່າງແຂງແຮງເພື່ອຊ່ວຍໜູນແຫຼ່ງທຶນໃນການຊຸກຍູ້ໃຫ້ບັນດາ SME ໄດ້ເຂົ້າເຖິງ ຕາມດຳລັດ 93/ນຍ ເຊິ່ງປັດຈຸບັນມີປະມານ 600 ຕື້ກີບເທົ່ານັ້ນ ແລະ ມີເທົ່າໃດຫົວໜ່ວຍທີ່ເຂົ້າເຖິງແຫຼ່ງທຶນ; ສະນັ້ນ, ຈຶ່ງຢາກໃຫ້ເພີ່ມຂຶ້ນ 10 ພັນຕື້ກີບເພື່ອຕອບສະໜອງໃຫ້ພາກທຸລະກິດຮາກຖານເຫຼົ່ານີ້ໄດ້ເຂົ້າເຖິງແຫຼ່ງທຶນຕ່າງໆ. ອັນທີສອງ ສະເໜີໃຫ້ລັດຖະບານພິຈາລະນາຄືນບັນຫາຂໍ້ຄົງຄ້າງກ່ຽວກັບການສ້າງສະພາບແວດລ້ອມການດຳເນີນທຸລະກິດ, ຕໍ່ບັນຫານີ້ ແມ່ນຢາກໃຫ້ເອົາຫົວ ຂໍ້ດັ່ງກ່າວມາລາຍງານສະເພາະ ເພື່ອໃຫ້ຮູ້ວ່າການແກ້ໄຂຫົວຂໍ້ນີ້ ແຕ່ລະປີໄດ້ແກ້ໄຂຈັກຂໍ້ແລ້ວ ແລະ ຈະຕໍ່ສືບແກ້ໄຂແນວໃດຕື່ມ. ທ່ານສະແດງຄວາມເຫັນດີເປັນເອກະພາບຕໍ່ບົດລາຍງານຂອງລັດຖະບານ ເຫັນວ່າມີຫຼາຍໜ້າວຽກໄດ້ຮັບການຈັດຕັ້ງປະຕິບັດຢ່າງມີຜົນສຳເລັດໂດຍພື້ນຖານ, ແຕ່ສະເໜີໃຫ້ລັດຖະບານຄົ້ນຄວ້າພິຈາລະນາເບິ່ງຄືນກ່ຽວກັບບັນຫາຕ່າງໆທີ່ຍັງຄົງຄ້າງໃນການຂຸດຄົ້ນແຮ່ທາດຂອງບັນດາບໍລິ



ສັດເນື່ອງຈາກບັນຫາເຫຼົ່ານີ້ ໄດ້ສ້າງຜົນເສຍຫາຍຫຼາຍກວ່າຜົນໄດ້ຮັບ ໂດຍສະເພາະຜົນກະທົບຕໍ່ສະພາບແວດລ້ອມ, ຖະໜົນຫົນທາງເປ່ເພ ແລະ ອື່ນໆ.

**ທ່ານ ນາງ ທິງຄຳ ໄຊຍະຄົມ** ສສຊ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ສະເໜີໃຫ້ລັດຖະບານ ເອົາໃຈໃສ່ແກ້ໄຂບັນຫາການສໍ້ລາດບັງຫຼວງທີ່ເກີດຂຶ້ນ ເຊິ່ງສົ່ງຜົນເສຍຫາຍຢ່າງມະຫາສານໃຫ້ແກ່ປະເທດຊາດ ເຮັດໃຫ້ເງິນຮົ່ວໄຫຼບໍ່ເຂົ້າງົບປະມານຂອງລັດ.

**ທ່ານ ສີເຮັງ ທອມສົມບັດ** ສສຊ ປະຈຳເຂດເລືອກຕັ້ງ 14 ແຂວງສາລະວັນ ໄດ້ສະເໜີໃຫ້ລັດຖະບານ ຫັນລົງກໍ່ສ້າງຮາກຖານ, ພັດທະນາຊົນນະບົດຢ່າງແຂງແຮງໂດຍສະເພາະການຈັດຕັ້ງປະຕິບັດມະຕິຂອງພັກ ກໍຄືກົດໝາຍ ໃນການຈັດຕັ້ງປະຕິບັດຕາແສງໃຫ້ເຂັ້ມແຂງ, ຖ້າຫາກຮາກຖານມີຄວາມເຂັ້ມແຂງປະເທດຊາດກໍມີຄວາມເຂັ້ມແຂງ ພ້ອມທັງໃຫ້ສືບຕໍ່ແກ້ໄຂບັນຫາທີ່ເຄັ່ງຮ້ອນດ້ານເສດຖະກິດ-ສັງຄົມ ດ້ວຍການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ, ຕ້ອງດັດປັບໂຄງປະກອບເສດຖະກິດຂະແໜງການຄືນໃໝ່, ເລັ່ງດ່ວນແຜນການກໍ່ສ້າງ ແລະ ປັບປຸງເສັ້ນທາງໃນທົ່ວປະເທດ, ການຕອບໂຕ້ໄພພິບັດທາງທຳມະຊາດ ແລະ ອື່ນໆ. ພ້ອມນີ້, ທ່ານຍັງໄດ້ສະເໜີໃຫ້ສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍໃຫ້ຈະແຈ້ງ, ຈັດລະບຽບການປົກຄອງຄືນໃໝ່, ປັບປຸງກົງຈັກໃຫ້ກະທັດຮັດ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານມີຄວາມຮັດກຸມ, ສອດຄ່ອງກັບແນວທາງນະໂຍບາຍຂອງພັກ-ລັດວາງອອກ ທັງນີ້, ກໍເພື່ອເປັນພື້ນຖານໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030).

**ທ່ານຄຳສິງ ໄຊສົມແພງ** ສສຊປະຈຳເຂດເລືອກຕັ້ງທີ14 ແຂວງສາລະວັນ ມີຄຳເຫັນບາງບັນຫາໃນການຂຶ້ນແຜນງົບປະມານ, ການວາງຖານລາຍຮັບ. ຕາມກົດໝາຍວ່າດ້ວຍງົບປະມານ ໂດຍສະເພາະແຫຼ່ງລາຍຮັບງົບປະມານ ແມ່ນມາຈາກ 4 ແຫຼ່ງຄື: ພາສີ-ອາກອນ, ບໍ່ແມ່ນ



ພາສີ-ອາກອນ, ການຊ່ວຍເຫຼືອ, ການຊ່ວຍເຫຼືອຈາກສັງຄົມ; ແຕ່ຢາກເນັ້ນ 2 ບັນຫາຄື: ພາສີ-ອາກອນແລະບໍ່ແມ່ນພາສີ-ອາກອນ ເພາະພາສີ-ອາກອນມີ: ອາກອນກຳໄລ, ລາຍໄດ້ມອບເໜົາ ແລະ ບໍ່ແມ່ນພາສີ-ອາກອນມີ: ຄ່າເຊົ່າ-ສຳປະທານ, ຄ່າປັນຜົນ, ເງິນກູ້, ຄ່າປັບໃໝ ແລະ ການຂາຍຊັບສິນທີ່ສັ່ງຢຶດເປັນຂອງລັດ. ຜ່ານມາລັດຖະບານໄດ້ເອົາແຫຼ່ງລາຍ



ຮັບດັ່ງກ່າວມາເຂົ້າເປັນຖານຂໍ້ມູນລາຍຮັບແລ້ວບໍ? ບັນຫານີ້ຄວນກວດ ກາເບິ່ງຄືນ ເຊິ່ງລັດຖະບານຄວນເອົາໃຈໃສ່ແທ້ໆ ຖ້າເຮົາສະຫຼຸບຕີລາຄາຖານລາຍຮັບທີ່ມີຕົວຈິງ, ຂ້າພະເຈົ້າຄິດວ່າອາດ ຍາກຈະໄດ້ລາຍຮັບງົບປະມານເກີນແຜນ ເພາະຜ່ານການລາຍງານຂອງອົງການກວດສອບແຫ່ງລັດ ແລະ ອົງການກວດກາລັດແຫ່ງລັດ ໃນກອງປະຊຸມສະໄໝສາມັນຜ່ານມາ ກໍເຫັນວ່າຍັງມີຂໍ້ຫຍຸ້ງຍາກໃນການເກັບພາສີ-ອາກອນຍາກຂຶ້ນ, ບາງບໍລິສັດບໍ່ໃຫ້ການຮ່ວມມື, ບາງບ່ອນເກັບບໍ່ໄດ້ເຕັມເມັດເຕັມໜ່ວຍ ເຮັດແນວໃດຈະໄດ້ຮັບງົບປະມານເກີນແຜນ; ສະນັ້ນ, ຕ້ອງສັງລວມເກັບກຳຂໍ້ມູນຖານລາຍຮັບໃຫ້ຄົບຖ້ວນ. ທ່ານຍັງສະເໜີໃຫ້ລັດຖະບານເບິ່ງຄືນການອອກໃບຕາດິນໃຫ້ບຸກຄົນ ຫຼື ນິຕິບຸກຄົນຕື່ມ, ໃຫ້ມີການສັງລວມລະອຽດຄັກແນ່ ເພື່ອໃຫ້ປະຊາຊົນສາມາດນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມກົດໝາຍ.

**ທ່ານ ສາຍທອງ ໄຊຍະວົງ** ສສຊ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ສະເໜີໃຫ້ລັດຖະບານເອົາ ໃຈໃສ່ຢ່າງແຂງແຮງ ແລະ ພິຈາລະນາຢ່າງຖີ່ຖ້ວນຮອບຄອບ ກ່ອນອະນຸມັດໃຫ້ມີການຂຸດຄົ້ນແຮ່ທາດຂອງບັນດາບໍລິສັດ ເນື່ອງຈາກໄລຍະຜ່ານມາ ໄດ້ສ້າງຜົນກະທົບຫຼາຍດ້ານຕໍ່ສິ່ງແວດລ້ອມເປັນບໍລິເວນກວ້າງ.

**ທ່ານ ດົງເພັດ ພະຍົນ** ສສຊປະຈຳເຂດເລືອກຕັ້ງທີ16 ແຂວງເຊກອງ ສະເໜີໃຫ້ລັດຖະບານເອົາໃຈໃສ່ແກ້ຫົວທີໃນການແກ້ໄຂການຂາດແຄນຄູ ໂດຍການສະໜອງໂກຕາໃຫ້ຄູອາສາສະໝັກໄດ້ເຂົ້າເປັນລັດຖະກອນຄູ ແລະ ເອົາໃຈໃສ່ກ່ຽວກັບຫຼັກສູດການຮຽນ-ການສອນຂອງສາຍສາມັນຢູ່ໂຮງຮຽນ ໃຫ້ໄປຄຽງຄູ່ກັບການປະຕິຮູບລະບົບ



5-4 -3 ມາເປັນລະບົບ 6-3-3 ໃນແຜນຂອງລັດຖະບານທີ່ຈະປະຕິບັດເລີ່ມສົກຮຽນປີ2028-2029. ສຳລັບເງິນເກີນແຜນຂອງສູນກາງແລະທ້ອງຖິ່ນ, ສະເໜີໃຫ້ຈັດແບ່ງປັນຄືນໃໝ່ກ່ຽວ



ກັບເງິນເກີນແຜນຢູ່ທ້ອງຖິ່ນຜ່ານມາແມ່ນໃຫ້ສູນກາງ 50% ແລະ 50% ແມ່ນໃຫ້ແຂວງນຳໃຊ້, ຕໍ່ໄປຂໍສະເໜີໃຫ້ສູນກາງ 30% ແລະ 70% ແມ່ນໃຫ້ທ້ອງຖິ່ນນຳໃຊ້ ຈະໄດ້ບໍ່?.

**ທ່ານ ແດງ ປະທຸມທອງ** ສສຊ ປະຈຳເຂດເລືອກຕັ້ງ 18 ແຂວງໄຊສົມບູນ ກ່າວວ່າ: ໃນໄລຍະຜ່ານມາ, ການລົງທຶນ ແລະ ການຄຸ້ມຄອງການລົງທຶນ ຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ ເຊິ່ງບັນຫານີ້ ເປັນບັນຫາທີ່ສຳຄັນ ເພາະວ່າການລົງທຶນຂອງລັດຜ່ານມາ ກໍມີບັນຫານັບແຕ່ການຈັດຊື້-ຈັດຈ້າງ, ການປະເມີນ ແລະ ອື່ນໆ ແມ່ນມີຄວາມຫຍຸ້ງຍາກ, ຜ່ານມາກໍມີການຄ້າງຄາຫຼາຍໂຄງການ, ໃນຂະນະດຽວກັນ, ການລົງທຶນຂອງພາກເອກະຊົນກໍເຊັ່ນກັນ ມີຫຼາຍໂຄງການບໍ່ປະຕິບັດຕາມລະບຽບການ ເຮັດໃຫ້ເກີດມີທາງສຽງຈົ່ມວ່າຈາກສັງຄົມ; ສ່ວນການລົງທຶນຈາກເງິນຊ່ວຍເຫຼືອລ້າ ກໍເປັນບັນຫາສຳຄັນ ທັງໆທີ່ພວກເຮົາຂາດແຄນທຶນເພື່ອມາພັດທະນາ, ແຕ່ໃນເວລາມີໂອກາດໄດ້ຮັບທຶນຊ່ວຍເຫຼືອລ້າຊ້ຳພັດເຮັດບໍ່ໄດ້ດີເທົ່າທີ່ຄວນ. ສະນັ້ນ, ຕໍ່ບັນຫານີ້ ສະເໜີໃຫ້ລັດຖະບານເບິ່ງຄືນ ແລະພິຈາລະນາຢ່າງລະອຽດຕື່ມ ແລະ ໃຫ້ຈັດສັນໃຫ້ດີຂຶ້ນຕື່ມ. ການລົງທຶນໂຄງການແຮ່ທາດ, ຕໍ່ວຽກງານນີ້ ລັດຖະບານໄດ້ມີຄຳສັ່ງໄປແລ້ວ ແລະ ໄດ້ມີການປະເມີນປະເພດໂຄງການ ດີ, ກາງ, ອ່ອນ ແລະ ອ່ອນຫຼາຍ, ແຕ່ພາຍຫຼັງໄດ້ປະເມີນໄປແລ້ວ ໂດຍສະເພາະໂຄງການທີ່ເຮັດບໍ່ໄດ້ດີ ຍັງບໍ່ໃຫ້ຢຸດເຊົາ; ຕໍ່ກໍລະນີນີ້ ແມ່ນເປັນບັນຫາທີ່ແກ່ຍາວ. ສະນັ້ນ, ສະເໜີໃຫ້ເບິ່ງຄືນເຊັ່ນດຽວກັນ.



# ປະເທດລະສີລັງກາ ເມື່ອ ປະຊາຊົນຫ່າງໄກຄວາມທຸກຍາກ

❖ ວິເສດ ສະແຫວງສຶກສາ

ຂ່າວຫວຽດນາມທີ່ອອກມາອ່າວຫຼາຍໃນໄລຍະຫຼັງໆມານີ້ ຜົວພັນກັບການສ້າງບ້ານແປງເມືອງໃຫ້ມີລັກສະນະຍືນຍົງ ຕິດພັນກັບການແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ. ໃນເບື້ອງການພັດທະນາທີ່ຍືນຍົງ, ຫວຽດນາມເນັ້ນການສ້າງສະພາບແວດລ້ອມສີຂຽວ ອັນໝາຍເຖິງການປົກປັກຮັກສາສິ່ງແວດລ້ອມ, ທີ່ໂດດເດັ່ນປະຈັກຕາກໍຄື ແຜນສ້າງຕົວເມືອງສີຂຽວ ເຊັ່ນ: ການນຳໃຊ້ພະລັງງານສະອາດໃນບັນດາຕົວເມືອງ ໃນຕຶກອາຄານສະຖານທີ່ຢູ່ອາໄສ, ການປູກຕົ້ນໄມ້ໃນເຂດຊຸມຊົນ, ການຂະຫຍາຍສວນສາທາລະນະ, ການບໍລິການຖົງຖິ້ມຂີ້ເຫຍື້ອໃຫ້ພຽງພໍ, ການຈັດສັນຖະໜົນສະເພາະໃຫ້ຄົນຍ່າງແລະຂີ່ລົດຖີບ. ມາຫວ່າງບໍ່ດົນນີ້ (ໜັງສືພິມປະຊາຊົນ 28 ສິງຫາ 2025) ກໍມີຂ່າວກ່ຽວກັບຜົນສຳເລັດໃນການລຶບລ້າງເຮືອນຢູ່ທີ່ມີສະພາບຊຸດໂຊມ ແລະ ເຮືອນຢູ່ຊົ່ວຄາວ; ແຜນການທີ່ວ່ານີ້ ດຳເນີນງານພາຍໃຕ້ການຊີ້ນຳຂອງຄະນະຊີ້ນຳລະດັບສູນກາງຄັກແນ່ ໂດຍມີຂະບວນການແຂ່ງຂັນໃນຂອບເຂດທົ່ວປະເທດ ເພື່ອໃຫ້ເປັນກິດຈະກຳລະດັບຊາດທີ່ມີລັກສະນະພິເສດ, ຜົນສຳເລັດທີ່ຍາດໄດ້ຈາກການປະຕິບັດງານມີດັ່ງນີ້: ສາມາດລຶບລ້າງເຮືອນເປ່ເພຊຸດໂຊມ ແລະ ເຮືອນຢູ່ຊົ່ວຄາວ ໄດ້ທັງໝົດ 334,234 ຫຼັງ ມີມູນຄ່າ 50,000 ຕື້ດົງ (ປະມານ1.9 ຕື້ໂດລາ) ນີ້ຄືຜົນສຳເລັດກ້າວກະໂດດແທ້ໆເພາະຕາມຄາດໝາຍແລ້ວແມ່ນໃຫ້ສຳເລັດພາຍໃນປີ 2030 ແຕ່ສາມາດບັນລຸພາຍໃນປີ 2025 ນີ້ເອງ. ທ່ານ ຟາມ ມິງ ຈິງ ນາຍົກລັດຖະມົນຕີຫວຽດນາມ ເອີ້ນຜົນສຳເລັດນີ້ວ່າ: "ຜົນງານມະຫັດສະຈັນ" ທີ່ປະກອບສ່ວນເຂົ້າໃນແຜນການລວມ ໃນການຫຼຸດຜ່ອນຄວາມທຸກຍາກແບບຍືນຍົງ ແລະ ຄວາມອຶດຫິວ; ທ່ານນາຍົກຍັງໄດ້ໃຊ້ປະໂຫຍກຄຳເວົ້າທີ່ໜ້າຈັບໃຈວ່າ: ເຮືອນຫຼັງໃໝ່ແຕ່ລະຫຼັງ ລ້ວນແຕ່ແມ່ນພະຍານຫຼັກຖານທີ່ມີຊີວິດຊີວາ, ເປັນຂອງຂວັນ, ເປັນຊາຍຄາແຫ່ງຄວາມອົບອຸ່ນ, ຄວາມຮັກແພງທີ່ບໍ່ແບ່ງໃຫ້ຜູ້ທຸກຍາກ. ຜົນສຳເລັດຂອງບັ້ນລຶບລ້າງເຮືອນເປ່ເພຊຸດໂຊມ ແລະ ເຮືອນຢູ່ຊົ່ວຄາວນີ້ ໄດ້ປະກອບສ່ວນປັບປຸງຄວາມໄວ້ເນື້ອເຊື່ອໃຈຂອງປະຊາຊົນຕໍ່ການນຳພາຂອງພັກ ແລະ ເພີ່ມທະວີກ້ອນມະຫາສາມັກຄີທົ່ວປວງຊົນທັງຊາດ.

ເລື່ອງເປົ້າໝາຍການພັດທະນາທີ່ໃຫ້ບຸລິມະສິດໃນການຫຼຸດຜ່ອນແລະລຶບລ້າງຄວາມທຸກຍາກນີ້ ໄດ້ກາຍເປັນກະແສມາແຮງຂອງແຕ່ລະປະເທດ ແລະ ຂອງສະຫະປະຊາຊາດ ບໍ່ວ່າຈະເປັນໄລຍະປະຕິບັດເປົ້າໝາຍສະຫັດສະວັດ MDG ເມື່ອກ່ອນ ແລະ ເປົ້າໝາຍການພັດທະນາແບບຍືນຍົງ SDG ໃນປັດຈຸບັນ. ປະເທດສີລັງກາ ເມື່ອ 3 ປີຜ່ານມາ ກໍເກືອບເອົາຕົວບໍ່ລອດຍ້ອນການກະໜ່ຳຂອງວິກິດທາງເສດຖະກິດ ທີ່ເກີດຈາກສະພາບຂາດແຄນພະລັງງານຢ່າງໜັກ; ວິທີແກ້ໄຂສະເພາະໜ້າທີ່ລັດຖະບານຂອງປະເທດນີ້ ປະຕິບັດຢ່າງຮີບດ່ວນກໍຄື ເລື່ອງປາກ-ທ້ອງຂອງປະຊາຊົນ ໂດຍໄດ້ແຈກຢາຍເຂົ້າກິນໃຫ້ 2 ລ້ານຄົວເຮືອນລາຍໄດ້ຕ່ຳໃນທົ່ວປະເທດ, ຄົວເຮືອນລະ 10 ກິໂລ/ເດືອນ (ຕື່ມໃສ່ຈຳນວນເຂົ້າກິນທີ່ແຕ່ລະຄອບຄົວມີຢູ່ແລ້ວ). ນະໂຍບາຍເພື່ອປາກ-ທ້ອງດັ່ງກ່າວ ດຳເນີນໄປເປັນເວລາ 2 ເດືອນ ຄືໃນເດືອນມັງກອນ ແລະ ກຸມພາ 2023, ນີ້ກໍແມ່ນການແກ້ໄຂແບບສຸກເສີນ ເພື່ອໃຫ້ຄົນອຶດຫິວກວ່າ 6 ລ້ານຄົນ ມີແນວຢາໄສ້.

ເວົ້າບ່ອນສຸດ, ການພັດທະນາທີ່ຍືນຍົງນັ້ນ ຕ້ອງແມ່ນການພັດທະນາທີ່ເອົາຜົນປະໂຫຍດຂອງ "ຄົນເປັນກົກ" (People based Development) ແຕ່ຫາກບໍ່ແມ່ນເພື່ອສ້າງຮັ່ງຄູນມີໃຫ້ຄົນພຽງຍິບມືດຽວຄືຢູ່ໃນບາງປະເທດ.

ທະນາຄານພັດທະນາລາວ
LDB Bank




#ບ່າວກະບື

**ເມຍ:** "ໃນກໍລະນີໂລກນີ້ບໍ່ມີແມ່ຍິງເກີດມາ, ພວກຜູ້ຊາຍຄົງບໍ່ເປັນຮອດຊິຫຍິບຊິບໃສ່ໂສ້ງຕົນເອງຊໍ້າ"

**ຜົວ:** "ຈັ່ງແມ່ນຊາດເຈົ້າຈ້າ, ຖ້າບໍ່ມີແມ່ຍິງເກີດຢູ່ໃກ້ຄຽງຮຽງຂ້າງ, ພວກຜູ້ຊາຍກໍບໍ່ຈຳເປັນນຸ່ງໂສ້ງດອກ".

#BAOKBU

**WIFE:** "In case women were not born in the world, men would not have managed to stitch zippers in their own trousers".

**HUSBAND:** "You-foolish creature! in case there were no women around, there was no need for men to wear trousers at all!".

ກາຕູນພາສາ ກາຕູນ



ຄວາມປະໝາດຈາກການຂັບລົດໄວສ່ຽງໄດ້ອຸບັດເຫດ

● ໂດຍ : ພູຜາ




**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສົມ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພິດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລີນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລີນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ